# ໜັງສື

# ຄັມພີໂລກນິຕິ

ຂອງ

## ສຳນັກງານວັນນະຄະດີ

ແກ້ໄຂໂດຍ ມະຫາສິລາ ວີຣະວົງ
ດ້ວຍຄວາມເຫັນຊອບຂອງຄນະກັມມະການວັນນະຄະດີ

ຈັດພິມອອກຈຳໜ່າຍດ້ວຍທຶນຂອງມູນນິທິອາຊີ
ພິມເທື່ອທີ່ນຶ່ງ ຈຳນວນ ໒໐໐໐ ສະບັບ
ວຽງຈັນ ວັນທີ ໒໐ ສິງຫາ ພ.ສ. ໒໕໐໘

1965

# ຫນັງສື

# ຄັມພີໂລກນິຕິ

ຂອງ

## ສຳນັກງານວັນນະຄະດີ

ແກ້ໄຂໂດຍ ມະຫາສິລາ ວີຣະວົງ
ດ້ວຍຄວາມເຫັນຊອບຂອງຄນະກັມມະການວັນນະຄະດີ
ຈັດພິມອອກຈຳໜ່າຍດ້ວຍທຶນຂອງມູນນິທິອາຊີ
ພິມເທື່ອທີ່ນຶ່ງ ຈຳນວນ ໒໐໐໐ ສະບັບ
ວຽງຈັນ ວັນທີ່ ໒໐ ສິງຫາ ພ.ສ. ໒໕໐໘

# ຄຳນຳຂອງຜູ້ແກ້ໄຂ

ໜັງສືໂລກນິຕິ ຄືແບບແຜນຂອງໂລກ ຫລືປະເພນີອັນດີ ທີ່ມະນຸດໃນໂລກຄວນຖືເອົາເປັນແບບຢ່າງ ນີ້ແມ່ນນັກປາດຊາວອິນເດັຽຊື່ວ່າ ທ່ານວະຍາສະ ເປັນຜູ້ຮຽບຮຽງໄວ້ເປັນພາສາສາມະຄິດ ຫລືພາສາບາລີມີຢູ່ ໗ ບັ້ນ ຫລື ໗ ເຣື່ອງ ຄື ໑ ບັນດິດບັ້ນ (ກ່າວເຣື່ອງນັກປາດ) ໒ ສຸຊົນບັ້ນ (ກ່າວເຣື່ອງຄົນດີ) ໓ ພາລະຊົນບັ້ນ (ກ່າວເຣື່ອງຄົນຊົ່ວ) ໔ ມິຕຕະບັ້ນ (ກ່າວເຣື່ອງສ່ຽວສະຫາຍ) ໕ ອິຕຖີບັ້ນ (ກ່າວເຣື່ອງຜູ້ຍິງ) ໖ ຣາຊາບັ້ນ (ກ່າວເຣື່ອງພຣະຣາຊາແລະອຳນາດ) ໗ ປະກິນນະກະບັ້ນ (ກ່າວເຣື່ອງຍ່ອຍ)

ໜັງສືຄັມພີໂລກນິຕິທີ່ກ່າວມານີ້ ປາກົດວ່າຫລາຍຊາດໄດ້ແປອອກເປັນພາສາຂອງຕົນ ເພື່ອໃຫ້ປະຊາຊົນໃນຊາດຂອງຕົນໄດ້ຖືເອົາເປັນແບບຢ່າງໃນສິ່ງທີ່ດີ ແລະລະເວັ້ນໃນສິ່ງທີ່ຊົ່ວຕາມທີ່ກ່າວໄວ້ໃນຄຳສອນນີ້ ສະນັ້ນ ຂ້າພະເຈົ້າຈິ່ງໄດ້ພະຍາຍາມແປອອກເປັນພາສາລາວ ເພື່ອໃຫ້ປະຊາຊົນລາວໄດ້ຮູ້ເຫັນຂໍ້ຄຳສອນຕ່າງ ໆ ທີ່ຄວນຖືເອົາເປັນແບບຢ່າງ

ທີ່ຈິງໜັງສືທີ່ຮຽກວ່າ ນິຕິ ນີ້ຂອງເດີມເຂົາມີຢູ່ ໓ ຢ່າງຄື: ໂລກະນິຕິທີ່ທ່ານກຳລັງອ່ານຢູ່ນີ້ຢ່າງນຶ່ງ ຢ່າງທີ່ ໒ ແມ່ນທັມມະນິຕິ (ແບບແຜນທີ່ຊອບທັມ) ແລະຢ່າງທີ່ ໓ ແມ່ນຣາຊນິຕິ

(ແບບແຜນທີ່ພຣະອາຊາຄວນປະພຶດ ແລະພວກອຳນາດຄວນປະພຶດຕໍ່ພຣະອາຊາ) ຢ່າງທີ່ ນີ້ ຄືອາຊານິຕິນີ້ແມ່ນທ່ານພານ ໒ ຄົນ ຄືທ່ານອະນັນຕະຍາວ ແລະ ທ່ານຄະນານິສກະ ຜູ້ທີ່ເຄີຍໄດ້ເຝົ້າແຫນແລະຊ່ອຍເຫລືອພຣະອາຊາອົງປະເສີດມາແລ້ວ ເປັນຜູ້ຮຽບຮຽງໄວ້ ໜັງສືສອງເຣື່ອງຄື ທັມມະນິຕິ ແລະອາຊານິຕິນີ້ ຂ້າພະເຈົ້າບໍ່ໄດ້ຈັດພິມໄວ້ພ້ອມໃນໂລກນິຕິນີ້ ແຕ່ຈະຈັດພິມໄວ້ຕ່າງຫາກໃນໂອກາດຕໍ່ໄປ

ມະຫາສີລາ ວີຣະວົງ

# ຄັມພີໂລກນິຕິ

ຂໍນ້ອມໄຫວ້ພຣະຣັຕນະໄຕຣ

ຂ້າພະເຈົ້ານ້ອມໄຫວ້ ພຣະຣັຕນະໄຕຣແລ້ວ ຈະຂໍກ່າວ ໂລກນິຕິ (ຄືແບບແຜນປະເພນີຂອງໂລກ) ທີ່ອາຈານເກົ່າກ່ອນເກັບ ທ້ອນໂຮມມາຈາກຄັມພີຕ່າງ ໆ ແຕ່ພຽງຫຍໍ້ ໆ ໂດຍພາສາມະຄົດ

## (໑) ບັນດິດບັ້ນ (ບັ້ນນັກປາດ)

໑. ແມ່ນຈິງແທ້ ນິຕິສາດ (ຄືຄັມພີທີ່ກ່າວດ້ວຍແບບແຜນປະເພນີ) ນັບວ່າເປັນແກ່ນສານ ເປັນມານດາບິດາ ເປັນອາຈານແລະເປັນ ມິດ ຂອງຄົນໃນໂລກ ເພາະສະນັ້ນ ຄົນຜູ້ຮູ້ນິຕິສາດແຈ່ມແຈ້ງ ຈິງເປັນຄົນມີຄວາມຮູ້ແລະໄດ້ຍິນໄດ້ຟັງມາຫລາຍ

໒. ຄົນຂີ້ຄ້ານ ຈະມີສິລປະມາແຕ່ໃສ ຄົນບໍ່ມີສິລປະຈະເອົາຊັບມາ ແຕ່ໃສ ຄົນບໍ່ມີຊັບຈະເອົາມິດມາແຕ່ໃສ ຄົນບໍ່ມີມິດຈະເອົາ ຄວາມສຸກມາແຕ່ໃສ ຄົນບໍ່ມີຄວາມສຸກຈະເອົາບຸນມາແຕ່ໃສ ຄົນບໍ່ມີບຸນຈະເອົາຄວາມຈະເຣີນ (ຫລືນິບພານ) ມາແຕ່ໃສ.

໓. ບໍ່ມີຊັບແນວໃດ ສເມີດ້ວຍສິລປະ (ເພາະວ່າ) ສິລປະໂຈນລັກ ໄປບໍ່ໄດ້, ສິລປະເປັນມິດໃນໂລກນີ້ ແລະນຳຄວາມສຸກມາໃຫ້ໃນ ໂລກໜ້າດ້ວຍ

໔. ຢ່າສຳຄັນວ່າ ການສຶກສາເປັນຂອງເລັກນ້ອຍ ຈົ່ງໃຫ້ການສຶກສາຝັງໝັ້ນຢູ່ໃນໃຈສເໝີ ຈົ່ງເບິ່ງຕົວຢ່າງປວກແລະປາຄນ້ຳ ການສຶກສາຈະສຳເຣັດບໍຣິບູນໄດ້ຕ້ອງໃຊ້ເວລາເຫິງນານ.

໕. ຢ່າສຳຄັນວ່າ ວິຊາແລະສິລປະມີພຽງເລັກນ້ອຍ ວິຊາຫລືສິລປະນັ້ນ ແມ່ນມີພຽງຢ່າງດຽວ ແຕ່ໃຫ້ຄ່ອງເຄີຍແທ້ (ໃຫ້ຊຳນານແທ້) ກໍສາມາດລ້ຽງຊີວິດໄດ້.

໖. ແກ້ວມະນີ ບໍ່ຫ່ອນມີທຸກພູຜາ ຄຸດນໍງາ ບໍ່ຫ່ອນມີທຸກໂຕຊ້າງ ຈວງຈັນຫລ້າງບໍ່ຫ່ອນມີຖ້ວນທຸກປ່າ ບັນດິດຜູ້ມີຜຍາມາກລ້ຳ ບໍ່ມີແທ້ທຸກແຫ່ງຫົນ.

໗. ຜູ້ສລາດຫາກໄດ້ຍິນວ່າ ຄູຜູ້ສົມບູນດ້ວຍການສຶກສາມີຢູ່ໃນທີ່ໃດ ຄວນພາກພຽນພະຍາຍາມໄປໃນທີ່ນັ້ນແທ້ ເພື່ອສະດັບຮັບຟັງ.

໘. ຂອງຫ້າຢ່າງເຫລົ່ານີ້ໃຫ້ຄ່ອຍ ໆ ເຣັດຄື:- ການຮຽນສິລປະໃຫ້ຄ່ອຍຮຽນຊ້າ ໆ, ຊັບກໍໃຫ້ຄ່ອຍ ໆ ຫາ, ຂຶ້ນພູຜາກໍໃຫ້ຄ່ອຍ ໆ ຂຶ້ນ, ການເສບກາມຄຸນ ກໍໃຫ້ຄ່ອຍ ໆ ເສບ, ການຮ້າຍ ກໍໃຫ້ຄ່ອຍ ໆ ຮ້າຍ.

໙. ສິລປະວິທຍາມີ ໑໘ ປະການ ຄື– ໑. ຄວາມຮູ້ເຣື່ອງພາສາ, ໒. ຄວາມຮູ້ຈາຣີດປະເພນີ, ໓. ຄວາມຮູ້ການກໍ່ສ້າງ, ໔. ຄວາມຮູ້ເຣື່ອງຊ່າງກົນ, ໕. ຄວາມຮູ້ເຣື່ອງການພຍາກອນ, ໖. ຄວາມຮູ້ເຣື່ອງການດົນຕີ, ໗. ຄວາມຮູ້ເຣື່ອງການຟ້ອນລຳ, ໘. ຄວາມຮູ້ເຣື່ອງການຄຳນວນ, ໙. ຄວາມຮູ້ເຣື່ອງການຍິງທະນູ, ໑໐. ຄວາມ

ຮູ້ເຣື່ອງເຫດຜົນ, ໑໑. ຄວາມຮູ້ໃນທາງໝໍຢາ, ໑໒. ຄວາມຮູ້ເຣື່ອງການລະຄອນ, ໑໓. ຄວາມຮູ້ເຣື່ອງດາວ, ໑໔. ຄວາມຮູ້ເຣື່ອງກົນອຸບາຍ, ໑໕. ຄວາມຮູ້ເຣື່ອງການກອນ, ໑໖. ຄວາມຮູ້ເຣື່ອງການສັງເກດ, ໑໗. ຄວາມຮູ້ເຣື່ອງມົນ, ໑໘. ຄວາມຮູ້ໃນເຫດຜົນທີ່ຄວນເຊື່ອ.

໑໐. ບັກປາດ ເມື່ອບໍ່ມີຜູ້ຖາມ ກໍເປັນເໝືອນກອງ (ທີ່ບໍ່ມີຄົນຕີ) ແຕ່ເມື່ອຖືກຖາມ (ກໍເວົ້າ) ປານຫ່າຝົນ (ສ່ວນ) ຄົນໂງ່ຈະຖືກຖາມຫລືບໍ່ຖາມ ກໍເວົ້າຫລາຍສເມີ.

໑໑. ມີຄວາມຮູ້ຢູ່ໃນໃບລານ (ໃນຕຳຣາ) ມີທະນະສານ (ເງິນຄຳ) ຢູ່ໃນມືຂອງຄົນອື່ນ ເວລາມີກິດຈຳເປັນເກີດຂຶ້ນໂດຍດ່ວນ ຄວາມຮູ້ແລະຊັບນັ້ນກໍຄືກັນກັບບໍ່ມີ.

໑໒. ສາຍບົວ ເປັນເຄື່ອງແທກນ້ຳ (ໃຫ້ຮູ້ຈັກເລິກຕື້ນ) ຂນົບທັມນຽມເປັນເຄື່ອງແທກສະກຸນ (ຂອງຄົນວ່າສູງຫລືຕ່ຳ) ຄຳເວົ້າເປັນເຄື່ອງແທກຄວາມສລາດຫລືໂງ່ (ຂອງຄົນ) ຄວາມຫ່ຽວແຫ້ງຂອງຫຍ້າ ເປັນເຄື່ອງແທກດິນ (ວ່າຊຸ່ມຫລືບໍ່ຊຸ່ມ),

໑໓. ຄົນຜູ້ໄຮ້ການສຶກສາຫລືໄດ້ສຶກສານ້ອຍໜ້ອຍ ຍ່ອມສຳຄັນໂຕເອງວ່າ ມີຄວາມຮູ້ຫລາຍ ດັ່ງດຽວກັບກັບກົບທີ່ເຄີຍຢູ່ແຕ່ບວກ ບໍ່ເຄີຍເຫັນນ້ຳທະເລ.

໑໔. ຄົນຜູ້ບໍ່ສັ່ງສົມຄວາມຮູ້ໄວ້ໃນປະຖົມວັຍ, ບໍ່ທ້ອນທອມຊັບໄວ້ໃນວັຍທີ່ ໒ ແລະບໍ່ພຳເພັງທັມໃນວັຍທີ່ ໓ ໃນວັຍທີ່ ໔ ເຂົາຊິເຮັດຫຍັງໄດ້.

໑໕. ລູກເອີຍ! ເຈົ້າມົວຫລິ້ນຢູ່ເຮັດຫັຽງ? ຈົ່ງຮ່ຳຣຽນເຖີດລູກ? (ເພາະວ່າ) ຄົນຜູ້ບໍ່ຮ່ຳຣຽນຕ້ອງໄດ້ແບກຫາມໜັກ ໃນໂລກນີ້ ເຂົາຍ້ອງຍໍແຕ່ຄົນທີ່ໄດ້ຮ່ຳຣຽນ ລູກເອີຍ! ເຈົ້າຈົ່ງຮ່ຳຣຽນ ທຸກວັນ ໆ ເຖີດ.

໑໖. ພໍ່ແມ່ຊື່ວ່າເປັນສັດຕູແລະກໍ່ເວນໃຫ້ແກ່ລູກ ເພາະບໍ່ໃຫ້ລູກ ສຶກສາໃນເວລາຍັງນ້ອຍ (ລູກທີ່ບໍ່ມີຄວາມຮູ້) ຈະບໍ່ສງ່າງາມ ໃນທີ່ປະຊຸມເລີຍ ເໝືອນກາຕົກຢູ່ໃນກາງໝູ່ຫົງສັນນັ້ນ.

໑໗. ໜາມເທິງພູເຂົາແມ່ນໃຜແຫລມໃຫ້ ຕາໄສແຈ້ງແມ່ນໃຜ ປອດປາຕາໃຫ້ ກິ່ນຫອມຂອງດອກບົວທີ່ເກີດໃນຕົມ ແມ່ນ ໃຜ (ໃສ່ໃຫ້) ຜູ້ມີວິຊາສິນເປັນລູກຜູ້ດີ ກໍເປັນໄປເອງຕາມ ສະພາບສັນນັ້ນ.

໑໘. ໝາກພູບໍ່ໃສ່ປູນ ກໍບໍ່ມີຣົດແຊບ ຄົນບໍ່ມີຊັບແມ່ນຈະແຕ່ງໂຕດີ ກໍເປັນເຂີນ ໆ ຂອງກິນ (ອາຫານ) ຖ້າຂາດເກືອກໍຈາງ ການ ເວົ້າວາຈາພາກຂອງຄົນບໍ່ມີຄວາມຮູ້ ກໍຄືກັນ.

໑໙. ຜູ້ຟັງໂດຍໂຄຣົບ ຕັ້ງໃຈຟັງແທ້ ຍ່ອມໄດ້ປັນຍາຍ້ອນການຟັງ ເຂົາຮູ້ຈັກປະໂຍດດ້ວຍປັນຍາ ປະໂຍດທີ່ເກີດຈາກປັນຍານັ້ນເອງ ອຳນວຍຄວາມສຸກມາໃຫ້.

໒໐. ການກິນ ການເສບເມຖຸນ ການນອນ ມີຢູ່ໃນງົວແລະຄົນສເມີ ກັນ ວິຊາຄວາມຮູ້ເຮັດໃຫ້ຄົນວິເສດກວ່າສັດ (ດັ່ງນັ້ນ) ຄົນທີ່ ມີວິຊາຄວາມຮູ້ຈຶ່ງທໍ່ກັນກັບງົວ.

໒໑. ບໍ່ມີຊັບແນວໃດ ຈະສເມີດ້ວຍວິດຊາ ບໍ່ມີຂ້າເສິກໃດຊິທໍ່ພຍາດ ບໍ່ມີຄວາມຮັກແນວໃດ ທີ່ຈະສເມີດ້ວຍຄວາມຮັກຕົນເອງ ບໍ່ມີ ກຳລັງແນວໃດ ທີ່ຈະສເມີດ້ວຍກຳລັງຂອງກັມ.

໒໒. ຫົງຖ້າຢູ່ໃນກາງໝູ່ກາ ກໍບໍ່ງາມ ຣາຊສີຢູ່ໃນກາງໝູ່ງົວ ກໍຄື ກັນ ມ້າອັສດອນຢູ່ໃນກາງໝູ່ລາ ກໍບໍ່ງາມ ບັນດິດຢູ່ໃນກາງ ຄົນພານ ກໍຄືກັນ.

໒໓. ຄົນໂງ່ ເຖິງແມ່ນເຂົ້າໄປນັ່ງໃກ້ບັນດິດຈົນຕລອດຊີວິດເຂົາກໍຈະ ບໍ່ຮູ້ທັນເລີຍ ດັ່ງດຽວກັບຈອງບໍ່ຮູ້ຈັກຣົດແກງສັນນັ້ນ.

໒໔. ສ່ວນຄົນສລາດ ເຂົ້າໄປນັ່ງໃກ້ບັນດິດພຽງຄາວດຽວເຂົາກໍຈະຮູ້ ທັນໄດ້ທັນທີ ເໝືອນລີ້ນຮູ້ຈັກຣົດແກງສັນນັ້ນ.

໒໕. ນັກຣົບກ້າ ຖ້າບໍ່ມີສາສຕຣາ (ໃນມື) ແລ້ວ ຈະບໍ່ໄປສູ່ສນາມ ຣົບເລີຍ ບັນດິດ ຄົນຫຽວຫາງ ແລະພໍ່ຄ້າ (ຖ້າປາສຈາກ ຕຳຣາແລະເພື່ອນຝູງແລ້ວ) ກໍຈະບໍ່ເດີນໄປຕ່າງປະເທດເໝືອນ ກັນ.

໒໖. ບັນດິດ ບໍ່ຄວນປະກາດສິ່ງ (ເຫລົ່ານີ້ໃຫ້ຜູ້ອື່ນຮູ້ດີ) ຄວາມເສັຽ ຊັບ, ຄວາມອຸກໃຈ, ຄວາມປະພຶດເສັຽຫາຍໃນຄອບຄົວ, ການ ຖືກຫລອກລວງ ແລະຖືກດູໝິ່ນ.

໒໗. ຜູ້ໃດ ເວົ້າໃຫ້ພໍສົມໂຕ ຮັກໃຫ້ພໍສົມກັບສະພາບ ແລະຮ້າຍ ໃຫ້ພໍສົມກັບເຫດ ຜູ້ນັ້ນເປັນບັນດິດ.

໒໘. ບໍ່ມີເງິນ ມັກກິນຂອງແຊບ ຫລາຍຄົນມັກຂົ່ມເຫງຜູ້ບໍ່ມີກຳລັງ

ພຽງຄົນດຽວ ບໍ່ມີປັນຍາຄວາມຮູ້ ແຕ່ມັກເວົ້າປາຖະກະຖາ ພວກນົ້ທໍ່ກັບຄົນບ້າ.

໒໙. ລັກສນະທີ່ຊົ່ວຊ້ານີ້ ມີ ໓ ປະການ ຄື ໑. ເຂົາບໍ່ຮ້ອງກໍເຂົ້າໄປຫາ ໒. ເຂົາບໍ່ຖາມກໍເວົ້າຫລາຍ ໓. ເຂົາບໍ່ບ້ອງ ກໍອວດອ້າງຄຸນໂຕ.

໓໐. ຄົນຮູບບໍ່ງາມ ມັກເອ້ຫລາຍ ຄົນປັນຍາໜ້ອຍ ມັກອວດຮູ້ ຄຸນ້ຳບໍ່ເຕັມ ມັກເຟືອດ ງົວແມ່ທີ່ບໍ່ມີນົມ ມັກເໜັງຕີງ.

໓໑. ກົບນ້ອຍນັ່ງເຮັດທ່າດັ່ງຣາຊສີ ເມື່ອຖືກກາຄາບ ກໍມີແຕ່ຮ້ອງແອບ ໆ ຄົນບໍ່ມີປັນຍາ ທຳທ່າເປັນນັກປາດ ເມື່ອຖືກຜູ້ຮູ້ຖາມ ກໍມີແຕ່ເວົ້າ ອ່າອະ-ອ່າອະ.

໓໒. ພຣະຣາຊາບໍ່ອິ່ມໃນຊັບ ບັນດິດກໍບໍ່ເບື່ອຄຳສຸພາສິດ ສາຄອນບໍ່ອິ່ມນ້ຳ ຕາກໍບໍ່ເບື່ອໃນການເຫັນຮູບທີ່ໜ້າຮັກ.

໓໓. ຊາຍໜຸ່ມຜູ້ມີຮູບຮ່າງສົມບູນ ເກີດໃນສະກຸນໃຫ່ງໄພສານ (ສູງສັກ) ແຕ່ອ່ອນວິຊາຄວາມຮູ້ ເຂົາຈະບໍ່ສງ່າງາມເລີຍ ເໝືອນດັ່ງດອກຈານທີ່ບໍ່ມີກິ່ນຫອມສະນັ້ນ.

໓໔. ລູກຄົນຊັ້ນຕ່ຳ ກໍເປັນອຳມາດຂອງພຣະຣາຊາໄດ້ ລູກຄົນໂງ່ ກໍເປັນບັນດິດໄດ້ ຄົນບໍ່ເຄີຍມີເງິນ ກັບມີເງິນຫລວງຫລາຍກໍມີ ດັ່ງນັ້ນ ຄົນຈິງບໍ່ຄວນຖືຫຸ່ມຄົນ.

໓໕. ລູກສິດຄົນໃດ ຮຽນເທື່ອລະຫລາຍ ໆ ເພາະຄວາມໂລບໃນວິຊາ ລູກສິດຄົນນັ້ນກໍເປັນຄືຄົນກືກຝັນເຫັນ ແຕ່ບໍ່ສາມາດຈະເວົ້າໃຫ້ຜູ້ອື່ນຟັງໄດ້.

໓໒. ຊ່າງຕີໝໍ້ ບໍ່ແມ່ນຕີໝໍ້ເພື່ອໃຫ້ແຕກ ແຕ່ຕີເພື່ອໃຫ້ໝໍ້ງາມ ຄູ່ຕີສິດ ກໍບໍ່ແມ່ນເພື່ອໂຍນສິດໃຫ້ຕົກໄປໃນອະບາຍ (ບ່ອນບໍ່ຈະເຣີນ) ແຕ່ຕີເພື່ອຄວາມຈະເຣີນຂອງສິດເອງ.

໓໓. ຄົນເອົາໃບໄມ້ຫໍ່ກິສນາ ໃບໄມ້ກໍຫອມຕລົບໄປ ດັ່ງດຽວກັນກັບການເຂົ້າຄົບຫານັກປາດ.

ສຸດບັ້ນບັນດິດ

## (໒) ສຸຊົນບັ້ນ (ບັ້ນຄົນດີ)

໑. ຄວນຄົບຫາແຕ່ຄົນດີ ແລະທຳຄວາມຮັກແພງກັບຄົນດີທໍ່ນັ້ນ ເພາະວ່າ ການຮູ້ຫັນຂອງຄົນດີ ເປັນສິ່ງປະເສີດບໍ່ມີຊົ່ວເລີຍ

໒. ຈົ່ງເລີກການເກືອກກົ້ວພົວພັນກັບຄົນຊົ່ວ, ຈົ່ງຄົບຫາສະມາຄົມແຕ່ຄົນດີ, ຈົ່ງທຳຄວາມດີທັ້ງກາງເວັນແລະກາງຄືນ, ຈົ່ງລະນຶກເຖິງຄວາມບໍ່ໝັ້ນທ່ຽງສເມີ.

໓. ໝາກເດື່ອສຸກ ເຖິງແມ່ນວ່າທາງນອກມີສີແດງງາມກໍຈິງ ແຕ່ທາງໃນເຕັມໄປດ້ວຍໜອນສັນໃດ ຫົວໃຈຂອງຄົນຊົ່ວກໍສັນນັ້ນ.

໔. ໝາກມີ້ສຸກ ທາງນອກມີແຕ່ໜາມ ທາງໃນເຕັມໄປດ້ວຍຣົດອັນຫວານແຊບສັນໃດ ຫົວໃຈຂອງຄົນດີກໍສັນນັ້ນ.

໕. ໄມ້ຈັນ ເຖິງແມ່ນວ່າເຫງົ້າປານໃດ ກໍບໍ່ລະກິ່ນຫອມ ພຣະຍາຊ້າງເຖິງແມ່ນຢູ່ຕໍ່ໜ້າສົງຄາມ ກໍບໍ່ປະທ່າທາງ (ອັນອົງອາດ)

ອ້ອຍທີ່ຄົນເອົາໃສ່ໃນເຄື່ອງຫີບ ກໍບໍ່ລະອິດຫວານ ຄົນຜູ້ເປັນບັນດິດ ເຖິງແມ່ນໄດ້ຮັບທຸກ (ແສນສາຫັດ) ກໍບໍ່ປະລະທັມ.

໖. ທັມມະດາຣາຊສີ ເຖິງແມ່ນຫິວປານໃດ ກໍບໍ່ຍອມກິນໃບໄມ້ ທັມມະດາຣາຊສີ ເຖິງແມ່ນຈ່ອຍປານໃດ ກໍບໍ່ຍອມກິນຊີ້ນສັດ ຈຳພວກຊ້າງ.

໗. ລູກກະກຸນທີ່ເກີດໃນກະກຸນຜູ້ດີ ຕ້ອງຄອຍຣະວັງຮັກສາວົງກະກຸນໄວ້ ເຖິງແມ່ນຕົນເອງ ຈະໄດ້ປະສົບທຸກປານໃດ ກໍບໍ່ຄວນທຳກັມອັນຊົ່ວຊ້າ.

໘. ອິດແກ່ນຈັນ ເຢັນຂອງເຢັນໃນໂລກ, ຣັສມີຂອງພຣະຈັນຍັງເຢັນກວ່ານັ້ນ ແຕ່ຄຳສຸພາສິດທີ່ຄົນດີເວົ້າ ຍັງເຢັນກວ່າອິດແກ່ນຈັນແລະຣັສມີຂອງພຣະຈັນ.

໙. ຫາກຈະມີການປ່ຽນແປງ: ໂດຍພຣະທິດອອກທາງຕາເວັນຕົກ ພຣະບາເຂົາສເນຣຸອ່ອນນ້ອມລົງມາ ໄຟນາຣົກເຢັນ ແລະດອກບົວເກີດເທິງຈອມດອຍ ກໍຕາມ ແຕ່ວາຈາຂອງຄົນດີ ຈະບໍ່ມີການຜິດແຜກປ່ຽນແປງ ຈັກເທື່ອເລີຍ.

໑໐. ຮົ່ມເງົາຂອງຕົ້ນໄມ້ ພາໃຫ້ມີຄວາມເປັນສະບາຍ ຍິ່ງກວ່ານັ້ນແມ່ນຮົ່ມເງົາຂອງຍາດພີ່ນ້ອງບິດາມານດາ ຮົ່ມເງົາຂອງອາຈານແລະພຣະຣາຊາ ຍັງຍິ່ງກວ່າຮົ່ມເງົາຂອງຍາດພີ່ນ້ອງ ແຕ່ຮົ່ມເງົາຂອງພຣະພຸທສາສນາ ຍັງຍິ່ງກວ່ານັ້ນອີກຫລາຍທໍ່

໑໑. ແມ່ເຜິ້ງ ຕ້ອງການແຕ່ເກສອນດອກໄມ້ ຄົນດີຕ້ອງການແຕ່

ຄຸນຄວາມດີ ແມງວັນຕ້ອງການແຕ່ຂອງບູດເນົ່າ ຄົນຊົ່ວຕ້ອງການແຕ່ສິ່ງຊົ່ວຮ້າຍ.

໑໒. ຄົນຊົ່ວມັກຖືເອົາແຕ່ສິ່ງຊົ່ວຮ້າຍ ດັ່ງດຽວກັບໝູຕ້ອງການແຕ່ຂອງເໝັນ (ມັກກິນຂີ້) ຄົນດີມັກຖືເອົາແຕ່ຄຸນຄວາມດີ ດັ່ງດຽວກັນກັບຫິງ ຕ້ອງການແຕ່ນ້ຳນິມຫວານສະນັ້ນ.

໑໓. ເວົ້າຫຽາບ ເປັນຄວາມຊົ່ວຂອງແມ່ ກິຣິຍາບໍ່ດີ ເປັນຄວາມຊົ່ວຂອງພໍ່ ຖ້າພໍ່ແມ່ທັງສອງເປັນຄົນຊົ່ວ ລູກກໍຈະເປັນຄົນເວົ້າຫຽາບແລະກິຣິຍາບໍ່ດີ.

໑໔. ເວົ້າດີເປັນຄວາມປະເສີດຂອງແມ່ ກິຣິຍາດີ ເປັນຄວາມປະເສີດຂອງພໍ່ ຖ້າພໍ່ແມ່ທັງສອງເປັນຄົນດີ ລູກກໍຈະເປັນຄົນເວົ້າດີແລະກິຣິຍາດີ.

໑໕. ໃນເວລາມີເສິກ ຈຶ່ງຕ້ອງການຄົນກ້າ ໃນເວລາມີຄວາມວຸ່ນວາຍໂກລາຫົນ ຕ້ອງການຄົນມີຄວາມຄຶດຊ່ວຍແກ້ໄຂໃຫ້ສງົບ ໃນເວລາໄດ້ກິນເຂົ້ານ້ຳອັນແຊບ ຈຶ່ງຕ້ອງການຄົນຮັກແພງກັນ ໃນເວລາມີວຽກອັນເປັນປະໂຍດ ຈຶ່ງຕ້ອງການນັກປາດ

໑໖. ໝາເຫັນໝາ ກໍອ້າງແຂ້ວເພື່ອຂົບກັນ ຄົນຊົ່ວເຫັນຄົນຊົ່ວ ກໍຕ້ອງການຂ້າຟັນບຽດບຽນກັນ ສັນນັ້ນ.

໑໗. (ເມື່ອຍັງບໍ່ໄດ້ພິຈາຣະນາແນ່ແທ້) ບໍ່ຄວນເຮັດຫລືບອກໃຫ້ເຮັດວຽກການທັງຫລາຍໂດຍດ່ວນ (ເພາະວ່າ) ວຽກການທີ່ເຮັດໂດຍຄວາມຟ້າວຟັ່ງນັ້ນ ມັກພັງພາດ ແລ້ວຈະໄດ້ຮັບຄວາມກິນແໜງ ໃນພາຍລຸນ.

໑໘. ແຕ່ໃດມາ ຄົນຖ້າລະຄວາມໂກດໄດ້ ຈະບໍ່ໂສກເສົ້າ, ພວກອິສີທັງຫລາຍ ສໍຣະເສີນການລະຄວາມດູແຄວນບຸນຄຸນຄົນ, ຕ້ອງອົດທົນຕໍ່ຄວາມເວົ້າຫຽາບຊ້າກ້າແຂງ ຂອງຄົນທັງປວງ, ນັກປາດ ສໍຣະເສີນວ່າ ຄວາມອົດນັ້ນເປັນຍອດ.

໑໙. ການຢູ່ໃນສະຖານທີ່ຄັບແຄບເປັນທຸກ, ຍິ່ງກວ່ານັ້ນແມ່ນຢູ່ໃນທີ່ບໍ່ສະອາດ, ຢູ່ໃນທີ່ມີຄົນເປັນສັດຕູບໍ່ຮັກແພງກັນທຸກຍິ່ງກວ່ານັ້ນ, ຮ້າຍກວ່ານັ້ນອີກ ແມ່ນຢູ່ຮ່ວມກັບຄົນບໍ່ຮູ້ຈັກຄຸນ.

໒໐. ຄົນຜູ້ວ່າກ່າວບອກສອນ ແລະຫ້າມຈາກການອັນຊົ່ວຊ້າ ຍ່ອມເປັນທີ່ຮັກແພງຂອງຄົນດີ ແຕ່ບໍ່ເປັນທີ່ຮັກຂອງຄົນຊົ່ວເລີຍ.

໒໑. ຈະແພ້ຄົນຊັ້ນສູງໄດ້ ດ້ວຍການອ່ອນນ້ອມຕົນ ຈະແພ້ຄົນກ້າໄດ້ ຍ້ອນການຍຸໃຫ້ແຕກກັນ ຈະແພ້ຄົນຊັ້ນຕ່ຳໄດ້ ຍ້ອນໃຫ້ຂອງເລັກນ້ອຍ ຈະແພ້ຄົນສເມີກັນໄດ້ ຍ້ອນຄວາມພາກພຽນ.

໒໒. ຄົນເຂົາຍົກຊັບເປັນຂອງສູງສຳລັບໝູ່ ທຳລາຍຊັບອັນເປັນພິດຢ່າງດຽວທໍ່ນັ້ນ ນັ້ນວ່າທຳລາຍພິດທັງໝົດຂອງໝູ່ໄດ້ ດັ່ງນັ້ນ ເພິ່ນຈິ່ງກ່າວວ່າ ພິດກໍບໍ່ເປັນພິດ.

໒໓. ຈະຮູ້ກຳລັງຂອງມ້າໄດ້ດ້ວຍການແລ່ນຫັນ ຮູ້ກຳລັງຂອງງົວໄດ້ດ້ວຍການແກ່ຂົນ ຈະຮູ້ນ້ຳນົມ (ວ່າດີຫລືບໍ່ດີ) ດ້ວຍການຮີດ ຈະຮູ້ວ່າເປັນຄົນສລາດໄດ້ ດ້ວຍການສົນທະນາກັນ.

໒໔. ຊັບຂອງຄົນດີ ເຖິງແມ່ນມີໜ້ອຍ ກໍອາສັຍໄດ້ ດັ່ງດຽວກັນກັບ

ນ້ຳໃນສ້າງນ້ອຍ, ຊັບຂອງຄົນຊົ່ວ ເຖິງແມ່ນມີຫລາຍ ກໍອາສັຍບໍ່ໄດ້ ດັ່ງດຽວກັນກັບນ້ຳໃນທະເລ.

໑໕. ແມ່ນ້ຳຈະບໍ່ດື່ມກິນນ້ຳ, ຕົ້ນໄມ້ທັງຫລາຍກໍບໍ່ກິນຜົນຂອງມັນເອງ, ເມກຝົນກໍບໍ່ເລືອກບ່ອນຕົກ, ຊັບຂອງຄົນດີ ກໍເປັນປໂຍດແກ່ຄົນທົ່ວ ໆ ໄປ.

໑໖. ຢ່າປາຖນາ ໃນສິ່ງບໍ່ຄວນປາຖນາ ຢ່າຄະນຶງໃນສິ່ງທີ່ບໍ່ຄວນຄະນຶງ ໃຫ້ຄະນຶງຫາແຕ່ສິ່ງທີ່ເປັນໄປຕາມສະພາບທໍ່ນັ້ນ ຢ່າປະໃຫ້ເວລາເສັຽປະໂຍດລ້າ.

໑໗. ສິ່ງທີ່ບໍ່ໄດ້ຄິດກັບເກີດມີຂຶ້ນ ກໍມີ ສິ່ງທີ່ຄິດໄວ້ແລ້ວກັບຈິບຫາຍໄປກໍມີ ແຕ່ໄພຄະສົມບັດຂອງຍິງຊາຍທັງຫລາຍ ບໍ່ໄດ້ມີຂຶ້ນດ້ວຍຄວາມນຶກຄິດເລີຍ (ແຕ່ມີຂຶ້ນດ້ວຍການກະທຳ).

໑໘. ຄົນຜູ້ຮັກເພງຄົນຊົ່ວ ບໍ່ທຳຄວາມຮັກເພງກັບຄົນດີ ຊອບໃຈທັມຂອງຄົນຊົ່ວ ທັງສາມປະການນີ້ເປັນທາງເຫ່ງຄວາມຈິບຫາຍ

ສຸດບັ້ນຄົນດີ

## (໓) ພາລະຊົນບັ້ນ (ບັ້ນຄົນພານ)

໑. ການໃຫ້ເກີດຄວາມວຸ່ນວາຍ ກໍຍ່ອມທຳຄວາມຮັກໃຫ້ແຮງກ້າເກີນໄປ ເໝືອນໝໍ້ນ້ຳເຕັມເກີນເຄິ່ງທີ່ຄົນເອົາເທີນຫົວໄປ ຍ່ອມເພື້ອດ.

໒. ງູເປັນສັດມີພິດຮ້າຍ ຄົນຫຍາບຊ້າກໍມີພິດຮ້າຍ (ແຕ່) ຄົນຫຍາບຊ້າມີພິດຮ້າຍຍິ່ງກວ່າງູ (ເພາະວ່າ) ຖ້າງູຕອດຍັງແກ້ໄດ້ດ້ວຍມົນແລະຢາ (ສ່ວນ) ຄົນຫຍາບຊ້າຈະເອົາອັນໃດມາແກ້ໄດ້.

໓. ຜູ້ໃດເປັນຄົນພານ ຍັງຮູ້ຕົນຢູ່ວ່າເປັນຄົນພານ ຜູ້ນັ້ນນັບວ່າເປັນບັນດິດໄດ້ ເພາະຄວາມເຂົ້າໃຈນັ້ນ (ສ່ວນ) ຜູ້ໃດເປັນພານ (ແຕ່) ເຂົ້າໃຈວ່າໂຕເປັນບັນດິດ ຜູ້ນັ້ນເພິ່ນວ່າເປັນພານແທ້.

໔. ຕາບໃດບາບ (ຄວາມຊົ່ວ) ຍັງບໍ່ໃຫ້ຜົນ ຄົນໂງ່ຍັງສຳຄັນວ່າບາບນັ້ນເປັນນ້ຳເຜິ້ງ ເວລາໃດບາບໃຫ້ຜົນ ເວລານັ້ນເຂົາຈິ່ງຈະໄດ້ປະສົບທຸກ.

໕. ຄົນພານທີ່ມີກຳລັງ ຫາຊັບໄດ້ຢ່າງໂຫດຮ້າຍບໍ່ດີເລີຍ ຄົນປັນຍາຊົ່ວຢ່າງນັ້ນ ຕາຍແລ້ວຕ້ອງໄປເກີດໃນນາຣົກ.

໖. ໝູເປັນສັດທຳຮ້າຍໃນເຮືອນ ລີງເປັນສັດທຳຮ້າຍໃນປ່າ ນົກເປັນສັດທຳຮ້າຍໃນອາກາດ ແລະພານເປັນຜູ້ທຳຮ້າຍໃນໝູ່ຄົນ.

໗. ເວລາກາງຄືນ (ຜາກົດວ່າ) ຍາວຫລາຍ ສຳລັບຜູ້ນອນບໍ່ຫລັບ ທາງໂຍດນຶ່ງຍາວຫລາຍ ສຳລັບຜູ້ເດີນທາງລ້າ, ສັງສາຣະວັດກໍຍາວຫລາຍ ສຳລັບຄົນພານຜູ້ບໍ່ຮູ້ພຣະສັດທັມ.

໘. ໂທດໂຕເອງທໍ່ໝາກພ້າວ ຄົນຊົ່ວກໍມອງບໍ່ເຫັນ ສ່ວນໂທດຂອງຄົນອື່ນນ້ອຍທໍ່ເມັດງາ ກໍມອງເຫັນ.

໙. ຄົນຊົ່ວ ບໍ່ໃຫ້ຄົນອື່ນຮູ້ໂທດຂອງຕົນ ແຕ່ຄອຍສອດສ່ອງແລະຈັບຜິດໂທດຂອງຄົນອື່ນສເໝີ ເໝືອນເຕົ່າເຊື່ອງໂຕຂອງມັນໄວ້ໃນອອງສັນນັ້ນ.

໑໐. ການຍ້ອງຍໍວ່າເປັນບັນດິດ ທີ່ຄົນພານ (ຍ້ອງຍໍ) ໃຫ້ມີໂທດ ບັນດິດຕໍ່ບັນດິດທໍ່ນັ້ນ ຍ້ອງຍໍກັນ ຈິ່ງເປັນການຍ້ອງຍໍທີ່ດີ.

໑໑. ເພິງຜູກໃຈຄົນໂລບໄວ້ ດ້ວຍການໃຫ້ປະໂຍດ (ແກ່ເຂົາ) ຜູກໃຈຄົນກະດ້າງຖືໂຕດ້ວຍການຍົກມືໄຫວ້ ຜູກໃຈຄົນຫລົງໄວ້ ດ້ວຍການປະພຶດຕາມຄວາມພໍໃຈ (ຂອງເຂົາ) (ແຕ່) ຜູກໃຈບັນດິດໄວ້ ຕາມຄວາມເປັນຈິງ.

ສຸດບັ້ນຄົນຊົ່ວ

## (໔) ມິດບັ້ນ (ບັ້ນສ່ຽວ)

໑. ຄົນອື່ນທີ່ເອື້ອເຟື້ອນຳ ນັບວ່າເປັນພີ່ນ້ອງ ສ່ວນພີ່ນ້ອງທີ່ບໍ່ເອື້ອເຟື້ອນັບວ່າເປັນຄົນອື່ນ ພຍາດເກີດໃນກາຍບໍ່ມີປໂຍດ (ແກ່ຮ່າງກາຍເລີຍ) ຕົ້ນໄມ້ເກີດໃນປ່າທີ່ໃຊ້ເປັນຢາ ມີປໂຍດກວ່າ.

໒. ມິດໃດ ເວົ້າດີຕໍ່ໜ້າ ແຕ່ລັບຫລັງເວົ້າລຶບລ້າງຄຸນ (ຕິຕຽນ) ເພິງເວັ້ນມິດແບບນັ້ນເສັຽ ເໝືອນເວັ້ນໝໍ້ຢາພິດທີ່ມີນ້ຳເຜິ້ງ ສັນນັ້ນ.

໓. ຜູ້ໃດປະກອບແຕ່ສິ່ງທີ່ເປັນປໂຍດໃຫ້ ຜູ້ນັ້ນຊື່ວ່າພີ່ນ້ອງ ຜູ້ໃດທຳການລ້ຽງເກືອ ຜູ້ນັ້ນນັບວ່າພໍ່ ຜູ້ຄຸ້ນເຄີຍໄດ້ໃນທີ່ທຸກແຫ່ງ ຜູ້ນັ້ນແມ່ນມິດ ຜູ້ດັບຄວາມທຸກຮ້ອນໄດ້ໃນທຸກເວລາ ຜູ້ນັ້ນແມ່ນເມັຽ.

໔. ບໍ່ຄວນສນິດສນົມກັບຜູ້ບໍ່ແມ່ນມິດ ເຖິງແມ່ນມິດກໍບໍ່ຄວນສນິດ

ໃຫ້ຈີບແຈບ ເພາະລາງເທື່ອ ມິດຄຽດຂຶ້ນມາ ກໍອາດເພີຍໂທດ (ຂອງເຮົາ) ທັງໝົດ.

໕. ຜູ້ໃດທຳຮ້າຍຕໍ່ມິດເທື່ອນຶ່ງແລ້ວ ຢັ້ງປາກເຂົ້າໄປຕິດຕໍ່ກັບເຂົາອີກ ມັນຜູ້ນັ້ນ (ຜູ້ເຂົ້າໄປຕິດຕໍ່) ນັບວ່າຖືເອົາຄວາມຕາຍ ດັ່ງດຽວກັບແມ່ມ້າອັສດອນທີ່ມີຄັນສັນນັ້ນ.

໖. ໂອກາດຍັງບໍ່ອຳນວຍເວລາໃດ ຈົ່ງແບກອະມິດໄວ້ດ້ວຍບ່າ ເມື່ອໂອກາດມາເຖິງແລ້ວ ເວລານັ້ນແຫລະຈົ່ງທຳລາຍເສັຽ ເໝືອນເອົາຫີນທຸບໝໍ້.

໗. ເສດໜີ້ ເສດໄຟ ແລະເສດສັດຕູ ຄືກັນທັງນັ້ນ (ຖ້າຍັງເຫລືອຢູ່) ຕ້ອງຈະເຣີນງອກງາມຂຶ້ນເລື້ອຍ ໆ ເພາະສະນັ້ນ ເພິງກຳຈັດຢ່າໃຫ້ມີເສດ.

໘. ຄົນໃດ ປາກຫອມປານດອກບົວ ວາຈາເປັນປານນ້ຳແກ່ນຈັນ ຄົນຈັ້ງຊັ້ນບໍ່ຄວນຄົບຫາ ເພາະຫົວໃຈຂອງເຂົາເປັນວຸ່ນ ໆ ວາຍ ໆ

໙. ບໍ່ຄວນຄົບຫາກັບນາຍທີ່ເວົ້າຫຽາບ, ຂີ້ຖີ່ ແລະນາຍທີ່ບໍ່ຍ້ອງຍໍ (ບ່າວ) ມີແຕ່ຂົ່ມເຫັງ.

໑໐. ໃຫ້ຫລີກສັດມີເຂົາ ໕໐ ສອກ, ມ້າຮ້າຍ ໑໐໐ ສອກ, ຊ້າງມີງາ ໑໐໐໐ ສອກ ແຕ່ຫລີກຄົນຊົ່ວໂດຍການໜີຈາກປະເທດເສັຽເລີຍ

໑໑. ປະເທດຊົ່ວ, ມິດຊົ່ວ, ກະກູນຊົ່ວ, ພີ່ນ້ອງຊົ່ວ, ເມັຽຊົ່ວ, ທາດຊົ່ວ ເພິງເວັ້ນໃຫ້ໄກທີ່ສຸດ.

໑໒. ສ່ຽວໃດ ເປັນທີ່ເພິ່ງໄດ້ ໃນເວລາເຈັບເປັນ ໑ ເວລາອຶດປາກ ໑

ເວລາປະສົບຄວາມພິບາດ ໑ ເວລາຖືກສັດຕູຈັບ ໑ ເວລາຖືກຣາຊອາຊຍາ ໑ ແລະໄປປ່າຊ້າ ໑ ຜູ້ນັ້ນເປັນມິດດີແທ້.

໑໓. ຜູ້ມີວາຈາເປັນ (ເວົ້າມ່ວນ) ກໍມີມິດສະຫາຍມາກ ສ່ວນຜູ້ເວົ້າຄວາມຫຍາບຊ້າ ຈະບໍ່ມີມິດເລີຍ ຂໍ້ອຸປມານັ້ນຈົ່ງເບິ່ງພຣະອາທິດແລະພຣະຈັນນັ້ນເຖີດ.

ສຸດບັ້ນມິດ

## (໕) ອິດຖີບັ້ນ (ບັ້ນຜູ້ຍິງ)

໑. ສຽງເປັນຄວາມງາມຂອງນົກກາເວົາ ການປະຕິບັດຜົວດີເປັນຄວາມງາມຂອງນາລີທັງຫລາຍ ວິຊາຄວາມຮູ້ເປັນຄວາມງາມຂອງຊາຍຜູ້ມີຮູບເຮ່ຮ້າຍ ຄວາມອົດກັ້ນ ເປັນຄວາມງາມຂອງພວກຣືສີ.

໒. ຮູບເປັນຊັບຂອງສັດຕີ ວິຊາຄວາມຮູ້ເປັນຊັບຂອງຊາຍ ສິນເປັນຊັບຂອງພິກຂຸ ກຳລັງພົນເປັນຊັບຂອງພຣະຣາຊາ.

໓. ຣືສີຈ່ອຍຈິ່ງງາມ, ສັດ ໔ ຕີນພີຈິ່ງງາມ, ຊາຍມີຄວາມຮູ້ກໍງາມ ແລະຜູ້ຍິງມີຜົວຈິ່ງງາມ.

໔. ນັກດີດຕີ ເວັ້ນຊ້ອມ ໕ ວັນ ກໍຫລົງ ນັກຍິງທະນູ ເວັ້ນຍິງ ໗ ວັນກໍບໍ່ແນ່ ເມຍດີ (ຜົວໜີ) ເດືອນນຶ່ງກໍໃຈຕ່າງ ສິດຂາດຮຽນ ເດືອນເດົາ ກໍລືມ.

໕. ຄວາຍນັກກິນ ທົ່ງນັກສະດອກບົວ ຜູ້ຍິງທັງຫລາຍນັກຍິນດີໃນຜູ້ຊາຍ ຄົນດີນັກຫັນ.

໖. ອາຫານກິນທີ່ບ່ອນແລ້ວ ໑ ເມັຽດີທີ່ເຖົ້າແກ່ແລ້ວ ໑ ທະຫານ ຫານທີ່ຣົບແພ້ແລ້ວກັບມາ ໑ ເຂົ້າທີ່ໄດ້ຂົນມາໄວ້ເຮືອນແລ້ວ ໑ ຈິງຄວນຍ້ອງວ່າດີ.

໗. ຜູ້ຍິງທີ່ເຄີຍມີຜົວແລ້ວ ໒-໓ ຜົວ ໑ ພິກຂຸທີ່ເຄີຍເປັນເຈົ້າວັດມາ ແລ້ວ ໒-໓ ວັດ ໑ ນົກທີ່ເຄີຍຫລູດເຮ້ວມາແລ້ວ ໒-໓ ເທື່ອ ໑ ພວກໝູ່ນີ້ມີມາຍາຫລາຍ.

໘. ທໍຣະມານຄົນຊົ່ວ ດ້ວຍການຂ້ຽນຕີ, ທໍຣະມານມິດບໍ່ດີ ດ້ວຍ ການບໍ່ເອົານຳ, ທໍຣະມານຍິງຊົ່ວ ດ້ວຍການຕັດສັມພັນ, ທໍຣະ ມານຄົນມີຄວາມກະສັນຫລາຍ ດ້ວຍການໃຫ້ກິນໜ້ອຍ ໆ

໙. ຣາຕີປາສຈາກພຣະຈັນ ກໍບໍ່ງາມ, ມະຫາສມຸດ ປາສຈາກ ຟອງ ກໍບໍ່ງາມ, ສະນົວປາສຈາກຫົງ ກໍບໍ່ງາມ, ນາງນົງຣາມ ປາສຈາກຜົວ ກໍດູບໍ່ດີ.

໑໐. ໃພຣະຊັບ ແມ່ນຜົວເປັນຜູ້ຫາ ການຄຸ້ມຄອງຮັກສາແມ່ນ ໜ້າທີ່ຂອງຍິງ (ຜູ້ເປັນເມັຽ) ຜູ້ຊາຍເປັນຫົວໜ້າ ສ່ວນ ຜູ້ຍິງປຽບຄືເຂັມກັບໄໝຫຍິບທໍ່ນັ້ນ.

໑໑. ແມ່ນ້ຳທັງໝົດ ມີທາງໄປຄົດໂຄ້ງ ປ່າດົງທັງປວງ ກໍເຕັມໄປ ດ້ວຍໄມ້ ຜູ້ຍິງທັງຫລາຍກໍມັກທຳຊົ່ວໃນເມື່ອໄດ້ຊ່ອງທາງ.

໑໒. ຂຶ້ນຊື່ວ່າ ຜູ້ຍິງທັງຫລາຍໃນໂລກນີ້ ເປັນຄືກັນກັບແມ່ນ້ຳ, ທາງ ຫລວງໄປມາ, ຮ້ານເຫລົ້າ, ສາລາແລະນ້ຳສ້າງ ເວລາກຳຈັດ ຂອງເຂົາ ບໍ່ມີເລີຍ.

໑໓. ຜູ້ຍິງທີ່ມັກວິວາດຜິດຖຽງ ໑ ມັກເວົ້າບຽດສຽດສີ ໑ ມັກແຕ່ຄວາມຍ້ອງ ໑ ມັກຫຸງຕົ້ມຫລາຍເກີນພໍດີ ໑ ມັກກິນອາຫານກ່ອນຜົວ ໑ ມັກໄປຫລິ້ນເຮືອນຄົນອື່ນ ໑ ຍິງແນວນີ້ ແມ່ນມີລູກຕັ້ງ ໑໐໐ ຄົນ ຊາຍກໍ່ຄອນປະເສັ້ງ.

໑໔. ໃນການກິນແລະການເອ້ອິງ ມີຄວາມຮັກ (ຜົວ) ເໝືອນແມ່, ໃນທີ່ລັບບັງ ມີຄວາມອາຍ (ຜົວ) ເໝືອນນ້ອງສາວ, ໃນເວລາເຮັດວຽກແລະຄົວກິນ ເຮັດຄືສາວໃຊ້, ໃນເວລາມີພັຍເກີດເປັນທີ່ປຶກສາໄດ້, ໃນເວລານອນ ນອນຂ້າງຊ້າຍ, ໃສ່ໃຈໃນຮູບຮ່າງ (ຂອງຕົນ) ແລະອົດທົນໃນເວລາຄຽດຮ້າຍ, ຍິງຊນິດນີ້ແຫລະນັກປາດເວົ້າວ່າ ຍິງປະເສີດ, ຍິງນັ້ນຕາຍແລ້ວ ຕ້ອງໄດ້ເກີດໃນສວັນ.

໑໕. ຍິງໃດມີຜິວເໝືອນຄຳ, ຕາຄືຕາເນື້ອ, ຮ່າງຄິງສ້ວຍ, ຂາຮຽວ ຜົມງາມ, ແຂ້ວລະອຽດສເມີ, ສາຍບືເລິກ, ໜຸ່ມປູ່ສເມີ ແລະມີວາດຊິງງາມ, ຍິງນັ້ນເຖິງແມ່ນເກີດໃນກະກຸນຕ່ຳ ກໍຄວນແຕ່ງດອງດ້ວຍ.

໑໖. ຣະດູຝົນ ເປັນປະທານຂອງຣະດູທັງຫລາຍ ນາງຮູບງາມເປັນປະທານຂອງບັນດາພະຣິຍາ, ລູກຊາຍກົກເປັນປະທານຂອງລູກທັງຫລາຍ ແລະທິດເໜືອກໍເປັນປະທານຂອງທິດທັງຫລາຍ.

໑໗. ຍິງໃດ ປາກເປັນຜູ້ຊາຍ ຕ້ອງບຳເຣີປະຕິບັດຜົວຂອງຕົນ ທຸກ ໆ ຊາດຕິດຕໍ່ກັນ ໃຫ້ປານນາງຟ້າບຳເຣີພຣະອິນ.

໑໘. ຊາຍໃດ ຕ້ອງການເກີດເປັນຊາຍທຸກ ໆ ຊາດ ຈົງເວັ້ນການ ຫລິ້ນເມັຽຄົນອື່ນ ເໝືອນລ້າງຕີນແລ້ວ ເວັ້ນການຢຽບຕົມ ສັນນ້ນ.

໑໙. ຊາຍທີ່ແກ່ເຖົ້າເກີນປະມານ ຍັງນຳເອົາສາວນ້ອຍນົມທໍ່ໝາກ ໂກ ມາເຮັດເມັຽແລະປະຕິບັດໄປຕາມຄວາມພໍໃຈຂອງນາງເມັຽ ນ້ນ ນ້ນແມ່ນທາງແຫ່ງຄວາມຈິບຫາຍແລ.

ສຸດອິດຖີນ້ນ

## (໖) ຣາຊາບັ້ນ (ບັ້ນພຣະຣາຊາ)

໑. ພຣະຣາຊາບັນທົມພຽງຍາມດຽວ (ຄືນລະ ໓ ຊົ່ວໂມງ) ນັກປາດ ນອນ ໒ ຍາມ (໖ ຊົ່ວໂມງ) ຄົນຄະຣາວາດ (ພໍ່ເຮືອນທັມມະດາ) ນອນ ໓ ຍາມ (໙ ຊົ່ວໂມງ) ສ່ວນຄົນຂໍທານນອນຕລອດ ໔ ຍາມ (໑໒ ຊົ່ວໂມງ).

໒. ຂອງ ໕ ຢ່າງນີ້ຄື: ໑. ຄົນມີເງິນ ໒. ນັກປາດ ໓. ພຣະຣາຊາ ໔. ແມ່ນ້ຳ ໕. ໝໍປາ ບໍ່ມີໃນປະເທດໃດ ວັນດຽວກໍບໍ່ຄວນຢູ່ ໃນປະເທດນ້ນ.

໓. ໃນປະເທດໃດ ບໍ່ມີຄວາມນັບຖືກັນ, ບໍ່ມີຄວາມຮັກ, ບໍ່ມີພີ່ນ້ອງ

ແລະບໍ່ມີວິຊາຄວາມຮູ້ແນວໃດ (ພໍຈະຮຽນ) ປະເທດນັ້ນບໍ່ຄວນຢູ່ໃຫ້ຕລອດໄປ.

໔. ເຮືອນທີ່ບໍ່ມີລູກ ກໍສູນເປົ່າ ປະເທດທີ່ບໍ່ມີພຣະຣາຊາ ກໍສູນເປົ່າ ປາກຂອງຄົນຜູ້ບໍ່ມີສິລປະ (ຄວາມຮູ້) ກໍສູນເປົ່າ ຄົນທຸກຍາກສູນເໝົດທຸກແນວ.

໕. ຕ້ອງການຊັບ ຄວນຄ້າຂາຍ, ຕ້ອງການວິຊາຄວາມຮູ້ ເພິ່ງຄົບຫານັກປາດ, ຕ້ອງການລູກ ເພິ່ງເອົາເມັຽສາວ, ຕ້ອງການເປັນອຳນາດ ເພິ່ງປະຕິບັດຣາຊການໃຫ້ສຳເຣັດ.

໖. ນັກບວດ ບໍ່ສັນໂດດ ກໍຈິບຫາຍ, ພຣະຣາຊາທີ່ບໍ່ດີ ສັນໂດດກໍຈິບຫາຍ, ຜູ້ຍິງຫາກິນມີຄວາມອາຍ ກໍຈິບຫາຍ, ລູກສາວຂອງກະກູນບໍ່ມີອາຍ ກໍຈິບຫາຍ.

໗. ອາກາດ ເປັນກຳລັງຂອງນົກ, ນ້ຳເປັນກຳລັງຂອງປາ, ພຣະຣາຊາເປັນກຳລັງຂອງຄົນຜູ້ທຸພົລພາບ (ຄົນຜູ້ມີກຳລັງນ້ອຍ) ການຮ້ອງໄຫ້ເປັນກຳລັງຂອງເດັກນ້ອຍທັງຫລາຍ.

໘. ຜູ້ສແວງຫາທາງອັນເລີດ ຄວນພ່ຳເພັງຄຸນຄວາມດີ (ອັນເປັນເຄື່ອງໝາຍ) ຂອງຜູ້ເປັນຫົວໜ້າ ເຫລົ່ານີ້ຄື: (໑) ຄວາມອົດທົນ (໒) ຄວາມມີສະຕິຕື່ນຢູ່ສເມີ (໓) ຄວາມດຸໝັ້ນ (໔) ການແຈກຈ່າຍເຈືອຈານ (໕) ຄວາມເມດຕາປານີ ແລະ (໖) ເບິ່ງແຍງ (ຜູ້ອື່ນ)

໙. ປະເພນີນີ້ເປັນຂອງເກົ່າແກ່ສືບຕໍ່ກັນມາ ຄື ພຣະຣາຊາທັງຫລາຍຕັດຄຳດຽວ (ບໍ່ປ່ຽນຄຳເວົ້າ) ສະມະນະພຣາມທັງຫລາຍເວົ້າເທື່ອດຽວ (ອອກປາກຂໍເທື່ອດຽວ) ແລະສັດຕະບຸຣຸດໃນໂລກກໍເວົ້າເປັນຄຳດຽວ (ໝາຍຄວາມວ່າເວົ້າຈິງ).

໑໐. ຄະຫັດຜູ້ບໍຣິໂພກການ ຂີ້ຄ້ານບໍ່ດີ ນັກບວດບໍ່ສຳຣວມ ກໍບໍ່ດີ ພຣະຣາຊາກະທຳການໃດ ໆ ໂດຍບໍ່ພິຈາຣະນາໃຫ້ຖ່ອງແທ້ ກໍບໍ່ດີ ນັກປາດມັກຄຽດນັ້ນ ແຮ່ງບໍ່ດີຫລາຍ

໑໑. ພຣະຣາຊາເປັນຜູ້ຮູ້ຄວາມຈະເຣີນຄວາມເຊື່ອມ ແລະທັງຮູ້ກິຈການທີ່ອຳນາດທຳແລ້ວຫລືຍັງບໍ່ໄດ້ທຳ ດ້ວຍຕົນເອງ ດັ່ງນັ້ນ ຈິງຄວນຜາບບຸກຄົນຜູ້ຄວນຜາບ ແລະຍ້ອງຍໍບຸກຄົນທີ່ຄວນຍ້ອງຍໍ.

໑໒. ເພິງນັ່ງຕາກແດດດ້ວຍຫລັງ ຜິງໄຟດ້ວຍທ້ອງ ເສບສະມາຄົມກັບນາຍດ້ວຍການສລະທຸກຢ່າງ ແລະປາຖນາໄປສູ່ປະຣະໂລກດ້ວຍຄວາມບໍ່ຫລົງ.

໑໓. ຊາຍທີ່ຢູ່ຮ່ວມກັບເມັຽຜູ້ກົດຮ້າຍ ໑ ມີຄົນໃຊ້ທີ່ບໍ່ຊື່ສັດ ໑ ຢູ່ໃນເຮືອນທີ່ມີງູ ໑ ນີ້ແມ່ນທາງແຫ່ງຄວາມຕາຍໂດຍບໍ່ຕ້ອງສົງສັຍ.

໑໔. ໃນປະເທດໃດ ມີຜູ້ນຳຫລາຍ (ນາຍຫລາຍ) ພວກເຂົາທັງໝົດຕ່າງຄົນຖືໂຕວ່າເປັນຄົນສລາດ ຕ່າງຄົນປາຖນາຄວາມເປັນໃຫຍ່ ວຽກການຂອງພວກເຂົາຕ້ອງຈິບຫາຍແນ່.

໑໕. ຍ້ອນການສອນລູກສິດທີ່ໂງ່ ໆ ໑ ຍ້ອນການຫລິງລ້ຽງເມັຽທີ່ບໍ່ດີ ໑ ຍ້ອນການຢູ່ຮ່ວມກັບອະສັດບຸຣຸດ ໑ ເຖິງແມ່ນເປັນນັກປາດ ກໍຕ້ອງຫລົ້ມຈົມແນ່

໑໖. ບາບທີ່ລູກເຮັດ ກໍເປັນຂອງແມ່ ບາບທີ່ລູກສິດເຮັດ ກໍເປັນຂອງຄູ ບາບທີ່ຊາວເມືອງເຮັດ ກໍເປັນຂອງພຣະຣາຊາ ແລະ ບາບຂອງພຣະຣາຊາ ກໍເປັນຂອງປຸໂຣຫິດດ້ວຍ.

໑໗. ຄວາມບໍ່ຄຽດ ຊນະຄວາມຄຽດ, ຄວາມດີ ຊນະຄວາມບໍ່ດີ, ການໃຫ້ປັນ ຊນະຄວາມຂີ້ຖີ່ ແລະການເວົ້າຈິງ ຊນະຄົນເວົ້າໂລເລໄດ້.

໑໘. ການໃຫ້ເປັນການຂົ່ມໃຈຂອງບຸກຄົນຜູ້ບໍ່ເຄີຍໃຫ້, ການໃຫ້ຕ້ອງໄດ້ປໂຍດໃນທີ່ທຸກສະຖານ, ຄົນທັງຫລາຍມີຄວາມພໍໃຈ ແລະ ມີໃຈອ່ອນນ້ອມ ກໍຍ້ອນການໃຫ້ແລະຄວາມເວົ້າອັນອ່ອນຫວານ

໑໙. ທານ ເປັນຢາສເບ ຄວາມຂີ້ຖີ່ ເປັນປາແຫ່ງຄວາມບັງບຽດ ທານເປັນປາໃຫ້ມີຍົດ ຄວາມຂີ້ຖີ່ເປັນຢາແຫ່ງຄວາມກ້ຳພ້າ.

໒໐. ຈົງຊນະຄົນທັງຫລາຍທີ່ບໍ່ມີແກ່ນສານ (ຄວາມພ້ອມພຽງກັນ) ດ້ວຍຄວາມສາມັຄຄີ (ດັ່ງດຽວ) ກັບເຊືອກຂ່າວທີ່ຝັ້ນດ້ວຍຫຍ້າຍັງຜູກຊ້າງໄດ້.

໒໑. ຄົນທີ່ບໍ່ມີເພື່ອນຝູງ ເຖິງແມ່ນມີຄວາມສາມາດ ຈະເອົາເດດນັ້ນ (ຄວາມສາມາດນັ້ນ) ໄປເຮັດຫຍັງໄດ້ ດັ່ງດຽວກັບໄຟຕົກໄປໃນທີ່ບໍ່ມີລົມ ກໍຈະມອດໄປເອງ.

໒໒. ອຳນາດ ບໍ່ຄວນບໍຣິໂພກໃຊ້ສອຍ ການໂພກ ສເມີກັບພຣະ

ຣາຊາຈັກເວລາເລີຍ ແລະບໍ່ຄວນສະແດງທ່າທາງ, ສຽງ ເວົ້າ, ການທັດທິງດອກໄມ້ລູບໄລ້ຂອງຫອມຫລືປະດັບປະດາ ອາພອນທຸກຢ່າງ ໃຫ້ເໝືອນພຣະຣາຊາ.

໑໓. ອຳມາດຄວນຝັງໃຈໃຫ້ດີສເມີວ່າ ພຣະຣາຊາ ບໍ່ແມ່ນສ່ຽວຂອງເຮົາ, ພຣະຣາຊາບໍ່ແມ່ນຄູ່ຂອງເຮົາ ແຕ່ນັ້ນ ເພິ່ນເປັນນາຍເໜືອຫົວຂອງເຮົາ

໑໔. ອຳມາດຜູ້ເຝົ້າແຫນພຣະຣາຊາ ຄວນເວັ້ນໂທດ ໖ ປະການ ຄື ໑. ຢ່ານັ່ງໃກ້ຫລາຍ ໒. ຢ່ານັ່ງໄກຫລາຍ ໓. ຢ່ານັ່ງເໜືອລົມ ໔. ຢ່ານັ່ງຊື່ໜ້າ ໕. ຢ່ານັ່ງຕ່ຳຫລາຍ ແລະ ໖. ຢ່ານັ່ງສູງຫລາຍ ຕ້ອງມີສຕິຣະມັດຣະວັງ ເໝືອນຢູ່ໃກ້ກອງໄຟ.

໑໕. ຜູ້ມີຄຸນຄວາມດີສເມີດ້ວຍພຣະສັບພັນຍູ ຖ້າບໍ່ມີຄົນຊູ (ສນັບ-ສນູນ) ກໍບໍ່ສງ່າງາມ ດັ່ງດຽວກັບແກ້ວມະນີ (ຫົວແຫວນ) ມີຄ່າມາກ ແຕ່ບໍ່ມີທອງຄຳເປັນທີ່ອາສັຍ (ແຕ່ບໍ່ມີວົງແຫວນ) ກໍບໍ່ງາມສັບບັ້ນ.

ສຸດຣາຊາບັ້ນ

## (ກ) ປະກິນນະກະບັ້ນ (ບັ້ນຍ່ອຍ)

໑. ນັກບວດຜູ້ເກືອກກົ້ວຢູ່ກັບຜູ້ຍິງ ຈະມີສີນມາແຕ່ໃສ ? ຜູ້ມັກກິນຊີ້ນ ຈະມີໃຈກະຣຸນາມາແຕ່ໃສ ? ຜູ້ມັກດື່ມເຫລົ້າ ຈະເອົາ

ຄວາມສັດຈະມາແຕ່ໃສ? ຄົນຜູ້ມີຄວາມໂລບມາກ ດັ່ງຣືຈະມີຄວາມລັກອາຍ ? ຄົນຂີ້ຄ້ານຫລາຍດັ່ງຣືຈະມີສິລປະລະອຽດ ? ຄົນມັກຄຽດຮ້າຍໂກທາ ດັ່ງຣືຈະຫາຊັບໄດ້.

໒. ທາງວອດວາຍແຫ່ງໂພຄະຊັບແມ່ນ ໑, ນັກດື່ມສຸຣາ ໒. ທ່ຽວກາງຄືນ ໓. ທ່ຽວເບິ່ງມະຫໍຣະສົບ ໔. ຫລີ້ນການພະນັນ ໕. ຄົບຄົນຊົ່ວເປັນມິດ.

໓. ຄົນ ໕ ຈຳພວກນີ້ ເຖິງແມ່ນມີຊີວິດຢູ່ ກໍເປັນເໝືອນຄົນຕາຍແລ້ວ ຄື: ໑. ໜໍໄລ່ພີ ໒. ຄົນຕົກທຸກໄດ້ຍາກ ໓. ຄົນຂີ້ພຍາດ ໔. ຄົນມີໜີ້ສິນຫລາຍ ໕. ອຳນາດຜູ້ຢູ່ເຝົ້າພຣະຣາຊາບໍ່ມີເວລາຫວ່າງເວັ້ນ.

໔. ຜູ້ໃດເຫັນພັຍບໍ່ທັນມາເຖິງ ຫາທາງຫລີກເວັ້ນໄວ້ແຕ່ໄກ ເມືອເຫັນພັຍມາເຖິງແລ້ວ ບໍ່ສະທ້ານ ຜູ້ນັ້ນເປັນບັນດິດ.

໕. ຄົນ ໗ ຈຳພວກເຫລົ່ານີ້ ເປັນຜູ້ເວັ້ນຈາກຕຳຣາ ຄື: ໑. ຄົນມັກເຫງົານອນ ໒. ຄົນປມາດ ໓. ຄົນມີຄວາມສະບາຍ ໔. ຄົນມີພຍາດ ໕. ຄົນຂີ້ຄ້ານ ໖. ຄົນມີຄວາມປາກບໍ່ຖອຍ ໗. ຄົນກັງວົນບຳວຽກ

໖. ລານເອີຍ! ສູເຈົ້າຈົ່ງໄປຫາຄົນທຸກເຖີ້ນ (ເພາະ) ລານ (ຄົນນັ້ງມີເຂົ້າ) ເຕັມດ້ວຍລານແລ້ວ, ຝົນເອີຍ! ຈົ່ງຕົກລົງໃນທີ່ບົກແຫ້ງເຖີດ (ເພາະ) ນໍ້າ (ທະເລ) ເຕັມດ້ວຍນໍ້າແລ້ວ (ແຕ່ຄວາມປະສົງນີ້) ບໍ່ມີເປັນໄປຕາມຄວາມປະສົງ

໗. ເມື່ອທຳວຽກການສຳເຣັດແລ້ວ ບໍ່ມີຜູ້ໃດຫລຽວແລເບິ່ງຜູ້ເຮັດດອກ ດັ່ງນັ້ນ ເພິ່ງກະທຳວຽກການທັງປວງບໍ່ໃຫ້ຄ້າງຄາ.

໘. ບຸ່ນເປັນຂອງເບົາທີ່ສຸດໃນໂລກ ຄົນໃຈເບົາ ຍັງເບົາກວ່າບຸ່ນ ຄົນຜູ້ປມາດຕໍ່ຜູ້ເຖົ້າຜູ້ແກ່ ຍັງເບົາກວ່າຄົນໃຈເບົາ ຄົນປມາດໃນພຸທສາສນາ ຍັງເບົາກວ່ານັ້ນ.

໙. ຣິ້ນເຮັດດ້ວຍຫີນເປັນຂອງໜັກ ຄຳບອກເລົ້າຂອງເທພເຈົ້າ ຍັງໜັກກວ່າຫີນ, ຄຳສອນຂອງຄົນເຖົ້າແກ່ ຍັງໜັກກວ່າຄຳບອກຂອງເທພເຈົ້າ ຄຳສອນຂອງພຣະພຸທເຈົ້າ ຍັງໜັກກວ່ານັ້ນ.

໑໐. ມືຂວາເປັນຄົນໃຊ້ຂອງຮ່າງກາຍ ນິ້ວກ້ອຍທີ່ຢູ່ໃນມືຂວານັ້ນເປັນຄົນໃຊ້ຂອງຫູ, ດັ້ງແລະຕາ ມືເບື້ອງຊ້າຍເປັນຄົນໃຊ້ຂອງຕີນ.

໑໑. ໃນກາງໃນພູ ທ້າວກຸເວຣະຮັກສາຢູ່ປະຈຳ ບ່ອນກິກຂວ້ນ ແມ່ນຍັກຮັກສາ ແລະບ່ອນທາງໃນ ແມ່ນກາລະກິນີຮັກສາ ດັ່ງນັ້ນເມື່ອຈະຄ້ຽວພູ ຈົ່ງເດັດກິກແລະທາງໃນຖິ້ມກ່ອນ ຈິ່ງຈະເຣີນເປັນສິຣິສວັສດິ.

໑໒. ເປັນກະດານຮຽນໜັງສື ແມ່ນພົມຮັກສາ ໜັງສືຮຽນ ແມ່ນພຣະວິສນຸຮັກສາ ເຫດດັ່ງນັ້ນນັກຮຽນທັງຫລາຍ ຈົ່ງບູຊາເທພເຈົ້າສອງອົງນັ້ນ ເພິ່ນຈະນັບຖືນັກຮຽນທຸກເມື່ອ.

໑໓. ຜູ້ໃຫ້ໂພຄະຊັບແກ່ຊາວຄະຫັດທຸກຖ້ວນໜ້າ ແມ່ນງົວທີ່ເຂົາລ້ຽງ ເຫດນັ້ນ ຄົນຈິ່ງຄວນນັບຖືແລະສັກກາຣະງົວເໝືອນພໍ່ແມ່.

໑໔. ຜູ້ໃດກິນຊີ້ນງົວ ກໍເໝືອນກິນຊີ້ນແມ່ ດັ່ງນັ້ນ ເມື່ອງົວເຫລົ່ານັ້ນຕາຍ ກໍຄວນໃຫ້ແກ່ແຮ້ງ ຫລືເອົາໄຫລໄປຕາມກະແສນ້ຳ.

໑໕. ການແຮກຮຽນໜັງສືວັນພະຫັດ ສຳເຣັດຜົນ, ແຮກຮຽນວັນອາທິດແລະວັນສຸກ ໄດ້ເຄິ່ງ ໆ ກາງ ໆ ແຮກຮຽນວັນພຸດແລະວັນຈັນ ຈະບໍ່ສຳເຣັດ ຖ້າແຮກຮຽນວັນເສົາແລະວັນອັງຄາຣຈະຕາຍ.

໑໖. (ການຮຽນໜັງສື) ໃນວັນ ໘ ຄ່ຳ ຍ່ອມທຳລາຍຄູ, ໃນວັນ ໑໔ ຄ່ຳ ຍ່ອມທຳລາຍລູກສິດ, ໃນວັນ ໑໐ ຄ່ຳ ຍ່ອມທຳລາຍສິລປະ ແລະວັນ ໑໕ ຄ່ຳ ຍ່ອມທຳລາຍບິດາມານດາ.

໑໗. (ນັກຮຽນ) ໃນວັນຂຶ້ນແຮມ ໗ ຄ່ຳ ບໍ່ຄວນກິນໝາກພ້າວ ວັນຂຶ້ນແຮມ ໙ ຄ່ຳ ບໍ່ຄວນກິນໝາກນ້ຳເຕົ້າ ວັນຂຶ້ນແຮມ ໑໒ ຄ່ຳ ບໍ່ຄວນກິນເກິງບອນແລະຜັກ ຖ້າກິນສິລປະຈະເຊື່ອມ.

໑໘. ຄວນສລະຄົນ ໆ ນຶ່ງ ເພື່ອປໂຍດຂອງກະກຸນ ຄວນສລະກະກຸນນຶ່ງ ເພື່ອປໂຍດຂອງບ້ານ ຄວນສລະບ້ານ ໆ ນຶ່ງເສັຽ ເພື່ອປໂຍດຂອງເຂດແຂວງ (ແລະຄວນສລະແຜ່ນດິນເສັຽ ເພື່ອປໂຍດຂອງຕົນ.

໑໙. ອາຊີ ສັຕບຸຣຸດແລະຊ້າງ ສລະປະເທດທີ່ຢູ່ຂອງຕົນໜີໄປ (ຍ່ອມມີຄວາມວັທນາ) ສ່ວນພວກເຫລົ່ານີ້ ຄື ກາ ໑ ຄົນຊົ່ວ ໑ ໜີໄປສູ່ຄວາມຫລົ້ມຈົມໃນທີ່ນັ້ນ ໆ

໒໐. ຜູ້ສລາດ (ຈະຍ້າຍທີ່ຢູ່) ເພິ່ງຍົກຕີນຂ້າງນຶ່ງໄປ ແຕ່ອີກຂ້າງ

ບື້ງ ເພິງປຸດໄວ້ ພິຈາຣະນາເບິ່ງບ່ອນອື່ນໃຫ້ແນ່ນອນ ຖ້າ ເຫັນບໍ່ສົມຄວນ ກໍຢ່າລະທີ່ປູ່ເດີມ.

໖໑. ໃນເວລາຊື້ຂາຍຊັບແລະເຂົ້າເປືອກ ໑ ໃນເວລາຮ່ຳຮຽນວິທຍາ ຄວາມຮູ້ ໑ ໃນເວລາເປັນທູຕບອກຂ່າວສານ ໑ ແລະໃນເວລາ ເສບກາມຄຸນ ໑ ໃນເວລາດັ່ງນັ້ນ ບຸກຄົນຄວນລະຄວາມອາຍ ເສັຽ.

໖໒. ຫັນມະດາອ້ອຍ ມີຣົດຫວານຢູ່ທີ່ປ້ອງທຸກປ້ອງຕັ້ງແຕ່ຍອດລົງ ມາ ສາທຸຊົນກໍເປັນມິດທີ່ດີຢ່າງນັ້ນ ສ່ວນຄົນຊົ່ວແຕກຕ່າງ ກັນຫລາຍ.

໖໓. ຊາວນາ ພໍ່ຄ້າ ອຳມາດຜູ້ສຸຈຣິຕ ແລະນັກບວດທີ່ມີການ ສຶກສາແລະມີສີນບໍຣິສຸດ ມີໄພບູນໃນປະເທດໃດ ປະເທດນັ້ນ ກໍນັບວ່າໄພບູນ.

໖໔. ຍ້ອນການບໍ່ຈື່ມບໍ່ເລົາ ມົນ (ທີ່ຮຽນມາ) ກໍເສົ້າໝອງ (ຫລືລົງ ລືມ) ຍ້ອນການບໍ່ໝັ້ນກວາດປັດ ເຮືອນຊານຈຶ່ງຮົກເຮື້ອ ຄວາມ ຂີ້ຄ້ານຜັດສີ ເປັນເຄື່ອງມຸມເມົ້າຂອງຜິວພັນ ຄວາມປມາດ ເປັນເຄື່ອງເສົ້າໝອງຂອງຜູ້ຮັກສາ (ສີນທັມ).

໖໕. ຊັບສິນບັດເດີນໄປຫາຄົນຊົ່ວແລ້ວ ແຕ່ກັບມາເປັນຂອງທ່ານ ຜູ້ມີຄວາມພາກພຽນ ຄົນຊົ່ວທັງຫລາຍມັກກ່າວວ່າ ເປັນບຳ ກັມແຕ່ກ່ອນສເນີ ສ່ວນນັກປາດ (ຫລືຄົນກ້າຫານ) ບໍ່ເວົ້າ ດັ່ງນັ້ນ ເພິ່ນຕ້ອງພາກພຽນທຳງານທຸກຢ່າງ ຖ້າການງານ ນັ້ນຍັງບໍ່ສຳເຣັດ ມັນກໍບໍ່ໄດ້ຜິດທີ່ນັ້ນເອງ ຈະໄປຕິໃຜ?

# ໑໑
# ໂລກນິຕິສາດ

## (ໂລການຸສາສນະສາດ)

ນະມັຕຖຸ

ໂລກະນິຕິງ ປະວັກຂາມິ    ນານາສັຕຕະສະມຸຕຖິຕັງ
ມາຄະເທເນວະ ສັງເຂປັງ    ວັນທິຕວາ ຣະຕະນັຕຕະຍັງ

## (໑) ປັນທິຕກັນທັງ

໑ ນິຕິ ຫິ ໂລເກ ປຸຣິສັສສະ    ມາຕາປິຕາ ອາຈາຣິໂຍ ຈະ
ສາໂຣ    ນິຕໂຕ
ຕັສມາ ນິຕິງ ໂຍ ປຸຣິໂສ    ຍານີ ມະຫາ ໂຫຕິ ພະຫຸສຸຕໂຕ
ວິຊັນຍາ    ຈະ

໒ ອະລະສັສສະ ກຸໂຕ ສິປປັງ    ອະສິປປັສສະ ກຸໂຕ ທະນັງ
ອະທະນັສສະ ກຸໂຕ ມິຕຕັງ    ອະມິຕຕັສສະ ກຸໂຕ ສຸຂັງ
ອະສຸຂັສສະ ກຸໂຕ ປຸນຍັງ    ອະປຸນຍັສສະ ກຸໂຕ ສິວັງ

໓ ສິປປາສະມັງ ທະນັງ ນັຕຖິ    ສິປປັງ ໂຈຣາ ນະ ຄັນຫັນຕິ
ອິທະ ໂລເກ ສິປປັງ ມິຕຕັງ    ປະຣະໂລເກ ສຸຂາວະຫັງ

໔ ອັປປະກັງ ນາຕິມັນເຍຍຍະ    ຈິຕເຕ ສຸຕັງ ນິຕຖາປະເຍ
ວັມມິກຸທະກະພິນທຸວະ    ຈິເຣນະ ປະຣິປູຣະຕິ

໕ ຂຸທທັບຕິ ບາຕິມັບເບບບະ    ວິຊຊັງ ວາ ສິປປະມະຖະວາ
ເອກັງປິ ປະຣິໂບທາຕັງ    ຊີວິຕະກັປປະກາຣະບັງ

໖ ເສເລ ເສເລ ນະ ນະບິກັງ    ຄະເຊ ຄະເຊ ນະ ຄຸຕຕິກັງ
ວະເບ ວະເບ ນະ ຈັບທະບັງ    ຖາເບ ຖາເບ ນະ ປັບທິຕັງ

໗ ປັບທິໂຕ ສຸຕຕະສັນປັນໂບ    ບັຕຖະ ອັຕຖິຕິ ເຈ ສຸໂຕ
ນະທຸສສາເທບະ ຕັງ ຖາບັງ    ຄັບຕັພໂພວະ ສຸຕເຕສິບາ

໘ ສິບເບ ສິປປັງ ສິບເບ ທະບັງ    ສິບເບ ປັພພະຕະນາຣຸບທະ
ສິບເບ ກາມັສສະ ໂກທັສສະ    ສິບເບ ປັບຈະກາບະຖຸເບ ອິເມ

໙ ສຸຕິ ສະມະຕິ ສັງຂບາ ຈະ    ໂບຄາບິຕິ ວິເສສະກາ
ຄັບທັພພາ ຄະບິກາ ເຈວະ    ທະບຸເພທາ ຈະ ປູຣະບາ
ຕິກິຈສາ ອິຕິ ທາສາ ຈະ    ໂຊຕິ ມາບາ ຈະ ສັບທະຕິ
ເກຕຸມັບຕາ ຈະ ສັທທາ ຈະ    ສິປປັຕຖາຣະສະກາ ອິເມ

໑໐ ອະປຸຕໂຖ ປັບທິໂຕ ເພຣິງ    ປັຊຊຸບໂບ ໂທຕິ ປຸຈສິໂຕ
ພາໂລ ປຸຕໂຖ ອະປຸຕໂຖປິ    ພະທຸງປິ ພະບິເຕ ສະທາ

໑໑ ໂປຕຖະເກສຸ ຈະ ບັງ ສິປປັງ    ປະຣະທັຕເຖ ຈະ ບັງ ທະບັງ
ບະທາ ກິຈເຈ ສະມຸປປັບເບ    ນະ ຕັງ ສິປປັງ ນະ ຕັງ ທະບັງ

໑໒ ຊະລັປປະມາບັບຈະ ກະມຸທທະ    ກຸລັປປະມາບັງ ວິບໂບປະທາ
ບາລັງ    ບັງ
ພະບັຕຕິປປະມາບັງ ກະຖິຕັງ    ຕິບບັນມິລາຕັງ ປະຖະວິປປະ
ວະ ວາກບັງ    ມາບັງ

໑໓ ອັປປະສຸໂຕ ສຸຕັງ ອັປປັງ　　ພະຫຸງ ມັນຍະຕິ ມານະວາ
ສິນທຸທະກັງ ອະປັສສັນໂຕ　　ກຸເປໂຕ ຍັງ ວະ ມັນທະໂກ

໑໔ ຍະຖະນັງນະ ປະຣາຈິໂຕ ສິປປັງ ທຸຕິຍັງ ປະຣາຈິໂຕ ທະນັງ
ຕະຕິຍັງ ນະ ປະຣາຈິໂຕ ທັມມັງ ຈະຕຸຕຖັງ ກິງ ກະຣິສສະຕິ

໑໕ ພະຣັຕຕະ ປຸຕຕະ ກິລານະເສ　　ອະພະຣັຕຕະໂກ ພາຣະຫາ
ຣິໂກ

ພຣັຕຕະໂກ ປຸຊິໂຕ ໂລເກ　　ອະພຣັຕຕະ ປຸຕຕະ ທິເນ ນິເນ

໑໖ ມາຕາ ເວຣີ ປິຕະ ສັຕຕູ　　ເກນະ ພາ ເລນະ ສິກຂິຕາ
ສະພານັຊເຊ ນະ ໂສພະຕິ　　ຫັງສະມັຊເຊ ພະກາ ຍະຖາ

໑໗ ກັນຖະກາ ຄິຣິງໂກ ຕິກຂະຕິ　　ໂກ ອັນຊະນານິຄັກຂາຍັງ
ອຸປະລັສສະ ປັລລະເກ ໂກສຸ　　ຄັນທັງ ກຸລະປຸຕຕະຣູໂປ ໂກ
ປະວັຕຕະຣິ ສະນະຕິ ສະພາໂວ.

໑໘ ນະ ຣະສັງ ອະໂກຕັນພຸລັງ　　ອະຫັສສານິ ລັງກະຕັງ
ອະໂລນະກັນຕຸ ພຍັນຊະນັງ　　ພຍາກະຣະນັງ ອະສິປປັສສະ

໑໙ ສຸສສູສັງ ສຸຕະສັມປັນໂນ　　ສຸຕະປັນຍາຍະ ວັທທະຕິ
ປັນຍາຍະ ອັຕຖັງ ຊານາຕິ　　ອັຕໂຖ ຍາໂຕ ສຸຂາວະໂຫ

໒໐ ໂພຊະນາ ເມຖຸນາ ນິທທາ　　ໂຄເນ ໂປເສປິ ວິຊຊະຕິ
ວິຊຊາ ວິເສໂສ ໂປລັສສະ　　ຫີໂນ ໂຄນະສະໂມ ພະເວ

໒໑ ນັຕຖິ ວິຊຊາ ສະມັງ ວິຕຕັງ　　ນັຕຖິ ພຍາທິສະໂມ ຣິປຸ
ນັຕຖິ ອັຕຕະສະມັງ ເປມັງ　　ນັຕຖິ ກັມມະສະມັງ ພະລັງ

໑໒ ຫັງໃສ ນັຊເຊ ບະ ກາກາບັງ　ສີໂຫ ຄຸບບັງ ບະ ໂສພະເຕ
ຄັທຣະນັຊເຊ ບະ ຈະຕຸຣັງໂຄ　ພາລະນັຊເຊ ບະ ປັບທິໂຕ
໑໓ ຍາວະຊີວັມປິ ເຈ ພາໂລ　ປັບທິຕັງ ປະຍິຣຸປາສະຕິ
ບະ ໂສ ທັມມັງ ວິຊາບາຕິ　ທັພພິ ສຸປະຣະສັງ ຍະຖາ
໑໔ ນະຫຸຕຕັມປິ ເຈ ວິບຍູ　ປັບທິຕັງ ປະຍິຣຸປາສະຕິ
ຂິປປັງ ທັມມັງ ວິຊາບາຕິ　ຊິວຫາ ສູປະຣະສັງ ຍະຖາ
໑໕ ວິບາສັຕຖັງ ບະ ຄັຈເສຍຍະ　ສູໂຣ ສັງຄາມະພູມິຍັງ
ປັບທິຕັຫທະຄູ ວາບິຊໂຊ　ວິເທສະຄະມະໂບ ຍະຖາ
໑໖ ທະບະບາສັງ ນະໂບຕາປັງ　ຄະເຣ ທຸຈຈະຣິຕານິ ຈະ
ວັບຈະບັບຈະ ອະວະນາບັງ　ປັບທິໂຕ ບະ ປະກາສະເຍ
໑໗ ອັຕຕານຸຣູປະກັງ ວາກຍັງ　ສະພາວະຣູປະກັງ ປິຍັງ
ອັາຕານຸຣູປະກັງ ໂກທັງ　ໂຍ ໂສ ຊາບາຕິ ປັບທິໂຕ
໑໘ ອະທະບັສສະ ຣະສັງ ຂາທາ　ອະພະລັສສະ ຫະຕາ ບະຣາ
ອະປັບບັສສະ ວາກຍາ ກະຖາ　ອຸມມັຕຕະກະສະມາ ອິເນ
໑໙ ອັບວັຍທະຍັງ ຄະມະຍັບໂຕ　ອະປຸຈສາ ພະຫຸພາສະໂກ
ອັຕຕະຄຸນັງ ປະກາເສນໂຕ　ຕິວິທັງ ທີນະລັກຂະນັງ
໒໐ ອັປປະຣູໂປ ພະຫຸພາໂສ　ອັປປະປັບໂຍ ປະກາສິໂຕ
ອັປປະປຸໂຣ ຄະໂຕ ໂຂເພ　ອັປປະຂີຣາ ຄາວີ ຈະເລ
໒໑ ນັນທະໂກປິ ອຸເກຸຣ ສີໂຫ　ກາກັຄເຄນະ ປິເບ ປິເບ
ອະປັບທິປິ ປັບທິ ທຸຕວາ　ທີຣາ ປຸຈເສ ອະເບ ອະເບ

໓໒ ນະ ຕິຕຕິ ຣາຊາ ທະນັນຫິ    ປັນຫິໂຕປິ ສຸພາສິເຕ
ຊະເລ ສາຄະໂຣ ນະ ຕິຕຕິ    ຈັກຂຸປິ ປິບະຫັສສະເບ
໓໓ ອຸປະໂຍພະນະສັນປັນໂນ    ວິສາລະກຸລະສັມພະໂວ
ວິຊຊາ ຫີໂນ ນະ ໂສພະຕິ    ນິຄັນທາ ອິວະ ກິງ ສຸກາ
໓໔ ຫີນະ ປຸຕໂຕ ຣາຊະມັຈໂຈ    ພາລະປຸຕໂຕ ຈະ ປັນຫິໂຕ
ອະທະນັສສະ ທະນັງ ພະຫຸງ    ປຸຣິໂສ ນາວະນັນຍັຕຖະ
໓໕ ໂຍ ສິສໂສ ສິປປະໂລເພນະ    ພະຫຸງ ຄັນທາຕິ ຕັງ ສິປປັງ
ມູໂຄວະ ສຸປິນັງ ປັສສັງ    ກະເຖຕຸງ ນະ ອຸສສະຫະເຍ
໓໖ ນະ ພັນເຊຕຸງ ກຸມພະກາໂຣ    ກຸມພັງ ຄະເຕສີ ໂສພະນາ
ນະ ອິເປຕຸງ ອະປາ ເນສຸ    ສີສສານັງ ວຸຫຫິກາຣະນາ
໓໗ ຕັຄຄະຣັນຈະ ປະລາເສນະ    ໂຍ ນະໂຣ ອຸປະນັຍຫະຕິ
ປັຕຕາປິ ສຸຣະພິ ວາຍັນຕິ    ເອວັງ ທີຣູປະເສວະນາ.

ປັນຫິຕະກັນທັງ ນິຕຖິຕັງ

## (໒) ສຸຊນະກັນທັງ

໑ ສັພພິເຣວະ ສະມາເສຖະ    ສັພພິ ກຸພເພຖະ ສັນຖະວັງ
ສະຕັງ ສັທທັມມະມັນຍາຍະ    ເສຍໂຍ ໂຫຕິ ນະ ປາປິໂຍ
໒ ຈະຊະ ທຸຊຊະນະສັງສັຄຄັງ    ພະຊະ ສາທຸສະມາຄະມັງ
ກະຣະ ປຸນຍະມະໂຫຣັຕຕັງ    ສະຣະ ນິຈຈະມະນິຈຈະຕັງ
໓ ຍະຖາ ອຸທຸມພະຣະປັກກັງ    ພະຫິ ຣັຕຕະກະເມວະ ປິ
ອັນໂຕ ກິມິລະສັມປັນນັງ    ເອວັງ ທຸຊຊະນະຫະທະຍາ

໔ ຍະຖາປິ ປະບະສາ ປັກກາ  ພະຫິຣາ ກັບຕະກາ ເຈວະ
ອັນໂຕ ອະນິຕະສັນປັນນາ  ເອວັງ ສຸຊະນະຫະທະຍາ

໕ ສຸກໂຂປິ ຈັນທະນະຕະຣຸຊະຫາ  ນາໂຄຄະໂຕ ຣະນະມຸເຂນະ ນະ
ຕິຄັນຫັງ  ຊະຫາຕິ ລີລຫັງ
ຍັນເຕ ຄະໂຕ ມະຫຸຣະສັງ ນະ  ຫຸກໂຂປິ ປັນທິຕະຊະໂນ ນະ
ຊະຫາຕິ ອຸຈສຸ  ຊະຫາຕິ ທັມມັງ

໖ ສີໂຫ ນາມະ ຊຸຄັຈສາປິ  ປັນນະທີນີ ນະ ຂາທະຕິ
ສີໂຫ ນາມະ ກີໂສ ຈາປິ  ນາຄະມັງສັງ ນະ ຂາທະຕິ

໗ ກຸລະຊາໂຕ ກຸລະປຸຕໂຕ  ກຸລະວັງສານຸຣັກຂະໂກ
ອັຕຕະນາ ທຸກຂັປປັຕໂຕປິ  ຫີນັງ ກັມມັງ ນະ ການະເຍ

໘ ຈັນທະນັງ ສີຕະລັງ ໂລເກ  ຕະໂຕ ຈັນທັງ ວະ ສີຕະລັງ
ຈັນທະນະຈັນທະສີຕັມຫາ  ສາທຸ ວາກຍັງ ສຸພາສິຕັງ

໙ ອຸເທຕິ ພານຸ ປັສສິເມ  ເມຣຸຣາຊາປິ ນະມະຕິ
ສີຕະລັງ ຍະທິ ຍະມັຄຄິງ  ປັພພະຕັຄເຄ ຈະ ອຸປະລັດ
ວິກະເສ ນະ ວິປະຣິຕາ  ສາທຸວາຈາ ກຸທາຈະນັງ

໑໐ ສຸຂັງ ຣຸກຂັສສະ ສາຍາວະ  ຕະໂຕ ຍາຕິມາຕາປິຕາ
ຕະໂຕ ອາຈະຣິໂຍ ຣັນໂຍ  ຕະໂຕ ພຸທທັສສະ ເນກະທາ

໑໑ ພະມະຣາ ປຸປພະມິຈສັນຕິ  ຄຸນະນິຈສັນຕິ ສຸຊະນາ
ມັກຂິກາ ປູຕິນິຈສັນຕິ  ໂທສະນິຈສັນຕິ ທຸຊຊະນາ

໑໒ ທຸຊຊະໂນ ໂທສະມາທາຍະ  ຫຸຄັນທະມິວະ ສຸກະໂຣ
ສຸຊະໂນ ສຸຄຸນັຄຄາ ໂຫ  ຫັງໂສວະ ຂີຣະນິຈສະໂກ

໑໓ ມາຕາຫີນັສສະ ທຸພາສາ
ປິຕາຫີນັສສະ ທຸກິຣິຍາ
ອຸໂພ ມາຕາປິຕາ ຫີນາ
ທຸພາສາ ຈະ ທຸກິຣິຍາ

໑໔ ມາຕາເສດຖັສສະ ສຸພາສາ
ປິຕາເສດຖັສສະ ສຸກິຣິຍາ
ອຸໂພ ມາຕາປິຕາ ເສດຖາ
ສຸພາສາ ຈະ ສຸກິຣິຍາ

໑໕ ສັງຄາເມ ສຸຣະມິຈສັນຕິ
ມັນຕີ ສຸຂັງ ກຸຕູຫະເລ
ປິຍັນຈະ ອັນນະປາເນສຸ
ອັຕເຖ ກິຈເຈ ສຸປັນທິຕັງ

໑໖ ສຸນະໂຂ ສຸນະຂັງ ທິສວາ
ທັນຕັງ ທັສເສຕິ ຫິງສິຕັງ
ທຸຊຊະໂນ ທຸຊຊະນັງ ທິສວາ
ໂຣສະຍັງ ຫິງສະມິຈສັນຕິ

໑໗ ມາ ປະເວເທນະ ກິຈຈານິ
ກາ ເຣສິ ວາ ກາຣາເປສິ
ສະຫະສາ ກາຣິຕັງ ກັມມັງ
ມັນໂທ ປັສສານຸຕັປປະຕິ

໑໘ ໂກທັງ ຊະຫິຕວາ ນະ ກະທາຈິ ໂສຈະຕິ
ມັກຂັປປະຫານັງ ອິສະໂຍ ວັນນະຍັນຕິ
ສັພເພສັງ ຜະຣຸສະວະຈະນັງ ຂະເມຖະ
ຕັງ ຂັນຕັງ ອຸຕຕະມະມາຫຸ ສັນໂຕ.

໑໙ ທຸກໂຂ ນິວາໂສ ສັມພາເທ
ຖານະ ອະສຸຈິສັງກະເຕ
ຕະໂຕ ອະຣິນທິ ອັປປິເຍ
ຕະໂຕປິ ອະກະຕັນນຸນາ

໒໐ ໂອວະເທຍຍະ ອະນຸສາເສຍຍະ
ປາປະກາ ຈະ ນິວາຣະເຍ
ສະຕັງ ຫິ ໂສ ປິໂຍ ໂຫຕິ
ອະສະຕັງ ໂຫຕິ ອັປປິໂຍ

໒໑ ອຸຈຈັງ ອັຕຕະນິວາ ເຕນະ
ສູຣັງ ເພເທນະ ນິຊຊະເຍ
ນີຈັງ ອັປປະກະທາເນນະ
ວິຣິເຍນະ ສະມັງ ຊະເຍ

໑໒ ບະ ວິສັງ ວິສະນິຈຈາຫຸ
ທະບັງ ສັງຄັສສະ ອຸຈຈະເຕ
ວິສັງ ເອກັງວະ ຫະບະຕິ
ສັພພັງ ສັງຄັສສະ ຫັບຕິ ຈະ

໑໓ ຊະເວບະ ອັສສັງ ຊາບັບຕິ
ວາເຫາບະ ພະລິພັທທະກັງ
ຫຸເຫາບະ ຖັບຍັງ ຊາບັບຕິ
ພາສະນາເປບະ ປັນທິຕັງ

໑໔ ທະບັງ ອັປປັນປິ ສາທູບັງ
ກູເປ ວາຣິວະ ບິສສະໂບ
ພະຫຸນປິ ອະສາທູບັງ
ບະ ວາຣິວະ ອັບບະເວ

໑໕ ອາປັງ ປິວັນຕິ ໂບ ບັຊຊາ
ຮຸກຂາ ຂາທັນຕິ ໂບ ຜະລັງ
ວັສສັນຕິ ກະວະຈິ ໂບ ເມຄາ
ປະຣະນັຕຖາບະ ສະຕັງທະບັງ

໑໖ ອະປັຕເຖບຍັງ ບະ ປັຕເຖບຍະ
ອະຈິບເຕບຍັງ ບະ ຈິບຕະເບ
ສະພາວະ ເມວະ ຈິບເຕບຍະ
ກາລັງ ໂນຄັງ ບະ ປັຕຖະເບ

໑໗ ອະຈິບຕິຕັງ ປິ ພະວະຕິ
ຈິບຕິຕັງ ປິ ວິບັສສະຕິ
ບະ ຫິ ຈິບຕະນະຍາ ໂພຄາ
ອິຕຖິຍາ ປຸຣິສສະວາ

໑໘ ອະສັບຕັສສະ ປິໂຍ ໂຫຕິ
ບະ ສັບຕັງ ກຸຣຸເຕ ປິຍະ
ອະສະຕັງ ທັມມັງ ໂຣເຈຕິ
ຕັງ ປະຣາພະວະໂຕ ມຸຂັງ

ສຸຊະບະກັບທັງ ບິຕຖິຕັງ

## (໓) ພາລະຫຸຊະບະກັບໂຫ

໑ ອະຕິປິໂຍ ບະກາຕັພໂພ
ຂະໂຣ ໂກຕຸ ຫະລັງ ກະໂຣ
ລິຣະສາ ວະຫະນາ ໂບປິ
ອັທທະປູໂຣ ຄະໂຕ ບະຖາ

໒ ສັປໂປ ທຸຕໂຖ ຂະໂຮ ທຸຕໂຖ     ສັປປາ ທຸຕຖະຕະໂຮ ຂະໂຮ
ນັບໂຕ ສະເຖທີ ໂສ ສັປໂປ     ຂະໂຮ ເກຸປະສັນນະຕິ
໓ ໂຍ ພາໂລ ນັບຍະຕິ ພາລະບັງ     ປັນທິໂຕ ວາປິ ເຕນະ ໂສ
ໂຍ ພາໂຮ ປັນທິຕະມານີ     ເສວ ພາໂລຕິ ວຸຈຈະຕິ
໔ ນະທຸວາ ນັບຍະຕິ ພາໂລ     ຍາວະ ປາປັງ ນະ ປັຈຈະຕິ
ບະທາ ຈະ ປັຈຈະຕິ ປາປັງ     ອະຖະ ທຸກຂັງ ນິຄັຈສະຕິ
໕ ນະ ສາທຸ ພະລະວາ ພາໂລ     ສາທະສັ້ງ ວິນທະເຕ ທະນັງ
ກາບັສສະ ເພທາ ທຸປປັນໂນ     ນິຣິບັງ ໂສ ອຸປັຊຊະຕິ
໖ ຄະເຣ ທຸຕໂຖ ຈະ ມູສິໂກ     ວະເນ ທຸຕໂຖ ຈະ ວານະໂຮ
ສະກຸໂນ ທຸຕໂຖ ອາກາເສ     ນະເຣ ທຸຕໂຖ ຈະ ພຸຣາທຸມໂນ
໗ ທີຄາ ຊາຄະຣະໂຕ ຣັຕຕິ     ທີຄັງ ສັນຕັສສະ ໂຍຊະນັງ
ທີໂຄ ພາລານັງ ສັງສາໂຣ     ສັທທັມມັງ ອະວິຊຊານະຕັງ
໘ ຕິລະມັຕຕັງ ປະເຣສັງວະ     ອັປປະໂທສັນຈະ ປັສສະຕິ
ນາລິເກຣັງປິ ສະໂທສັງ     ຂະລະຊາໂຕ ນະ ປັສສະຕິ
໙ ນັຕຕະໂທສັງ ປະເຣ ຊັນຍາ     ຊັນຍາ ໂທສັງ ປະເຣສະຕຸ
ຖຸຍເທ ກັມມາວະ ອັງຄານີ     ປະຣະໂທສັນຈະ ລັກຂະເຍ
໑໐ ປັນທິຕັສສະ ປະສັງສາຍະ     ທັນໂທ ພາເລນະ ທີຍະເຕ
ປັນທິໂຕ ປັນທິເຕເນວະ     ວັນນິໂຕວະ ສຸວັນນິຕັງ
໑໑ ລຸທທັງ ອັຕເຖນະ ຄັນເທຍຍະ     ຖັທທັງ ອັນຊະລີກັມມຸນາ
ສັນທານະວຸຕຕິຍາ ມຸລທັງ     ຍະຖາພູເຕນະ ປັນທິຕັງ

ພາລະທຸຊຊະນະກັນໂທ ນິຕິໂຕ

24 / VII
ຫ້າມຈຳໜ່າຍ

## (໔) ນິຕຕະກັບໂທ

໑ ຫິຕາທະໂຣ ປະໂຣ ພັນທຸ  ພັນທູປິ ອະຫິໂຕ ປະໂຣ
ອະຫິໂຕ ເທຫະໂຊ ພຍາທິ  ຫິຕະນະຣັບຊະໂນສະຖງ
໒ ປະໂຣກເຂ ຄຸນະຫັບໂຕ ໂຍ  ປັຈຈັກເຂ ປິຍະວາທິໂນ
ວັຊເຊຍຍະ ຕາທິສັງ ນິຕຕັງ  ວິສະກຸນເຍ ຍະຖາ ນະທຸງ
໓ ໂສ ພັນທຸ ໂຍ ຫິເຕ ບຸຕໂຕ  ປິຕາໂຍ ໂທຕິ ໂປສະໂກ
ຕັງ ນິຕຕັງ ຍັຕຖະ ວິສສາໂສ  ສາພະຣິຍາ ຍັຕຖະ ບິພພຸຕິ
໔ ນະ ວິສສາໂສ ອະນິຕັສສະ  ນິຕຕັນຈາປິ ນະ ວິສສະເສ
ກະທາຈິ ກຸປປິເຕ ນິຕເຕ  ສັພພະໂທສັງ ປະກາສະຕິ
໕ ສະກິງ ທຸຕຖະຕິ ໂຍ ນິຕຍາ  ປຸນະ ສັນທິຕຸມິຈສະຕິ
ໂສ ນັຈຈຸງອຸປະຄັນທາຕິ  ຄພພາ ອັສສະຕຣີ ຍະຖາ
໖ ວະເທ ອະນິຕຕັງ ຂັນເທນະ  ຍາວະ ກາລັງ ອະນາຄະຕັງ
ຕະເນວະ ອາຄະເຕ ກາເລ  ສີລາບະ ພິນເທ ຄະຕັງວະ
໗ ອິນະເສໂສ ອັຄຄິເສໂສ  ສັຕຣູເສໂສ ຕະເຖວະ ຈະ
ປຸນັປປຸນັງ ວິວັທທັນຕິ  ຕັສມາ ເສສັງ ນະ ກາຣະເຍ
໘ ປະທຸມັງວະ ມຸຂັງ ບັສສະ  ວາຈາຈັນທະນະສີຕະລັງ
ຕາທີສັງ ໂນ ປະເສເວຍຍະ  ທະທະຍັງ ວະ ທະລາທະລັງ
໙ ນະ ສະເວ ພະຣຸສັງ ສາມິງ  ນະ ຈະ ເສເວຍຍະ ນັຈສະຣິງ
ຕະໂຕ ອະປັຄຄັນທັງ ສາມິງ  ເນວະ ນິຄຄະທິຕັງ ຕະໂຕ

໑໐ ສິງຄາບັງ ປັບຍາສະຫັຕຖັງ    ສະເຕບະ ວາຊີບັງ ວັຊເຊ
ຫັຕຖິງ ທັບຕິງ ສະຫັສເສບະ .    ເທສັງ ຈາເຄບະ ທຸຊຊະບັງ
໑໑ ກຸເທສັບຈະ ກຸນິຕຕັບຈະ    ກຸກຸລັບຈະ ກຸພັບທະວັງ
ກຸທາຣັບຈະ ກຸທາສັບຈະ    ທຸຣະໂຕ ປະຣິວັຊຊະເບ
໑໒ ໂຣຄາຕຸເຣ ຈະ ທຸພພິເຂ    ພບະສະເບ ຈະ ສັຕຕຸຄຄະເທ
ຣາຊະທວາເຣ ສຸສາເບຈະ    ສະຂາ ຕິຕຖາ ສຸນິຕຕະກາ
໑໓ ສີຕະວາໂຈ ພະທຸນິຕໂຕ    ຜະຣຸໂສປິ ອະນິຕຕະໂກ
ອຸປະນັງ ເອຕຖະ ບາຕັພພັງ    ສຸຣິບະຈັບທະຣາຊູບັງ

ນິຕຕະກັບໂທ ບິຕຖິໂຕ

## (໕) ອິຕຖິກັບໂທ

໑ ໂກກີລາບັງ ສັທທັງ ຮູປັງ    ບາຣີ-ຮູປັງ ປະຕິພພະຕາ
ວິຊຊາ ຮູປັງ ອະຮູປານັງ    ຂະມາ ຮູປັງ ຕະປັສສີນັງ
໒ ອິຕຖີບັບຈະ ທະບັງ ຮູປັງ    ປຸຣິສາບັງ ວິຊຊາ ທະບັງ
ພິກຂູບັບຈະ ທະບັງ ສີລັງ    ຣາຊູບັບຈະ ທະບັງ ພະລັງ
໓ ກີສາ ໂສພາ ຈະ ຕາປະສາ    ຖູລາ ໂສພາ ຈະຕຸປປາທາ
ປຸຣິສາ ຈະ ວິຊາ ໂສພາ    ອິຕຖີ ໂສພາ ສະສາມິກາ
໔ ປັບຈະຣັຕບາ ສຸຄັບທັພພາ    ສັຕຕະຣັຕບາ ອະບຸຄຄະທາ
ເອກະນາສາ ສຸພະຣິບາ    ອັທທະນາສາ ລິສສາ ນະລາ

| | |
|---|---|
| ໕ ຫິງ-ອະນະຕິ ປັງ- | ຫັງ-ອະນະຕິ ໂປ- |
| ຖີ-ອະນະຕິ ປຸ- | (ພິກ) ຊຸ ອະນະຕິ ຫັງ- |
| ໖ ຊິບບະນັບບັງ ປະສັງ ເສຍບະ | ຫາຣບຈະ ຄະຕະໂຍພະບັງ |
| ອະບະປັຈຈາຄະຕັງ ສູອັງ | ສັສສັບຈະ ເຄຫະນາຄະຕັງ |
| ໗ ທະວິຕຕິປັຕຕິກາ ບາຣີ ຈະ | ວິຫາຣະທະວິຕຕິປະຕິ ພິກຊຸ |
| ສະກຸໂບ ທະວິຕຕິປາສັບຈະ | ກະຕະນາໂບ ພະຫຸລອັງ |
| ໘ ຫຸຊຊະບັງ ປະຫາຣາ ທັບຕິ | ນິຕຕັງ ທັບຕັງ ອະພາບິກາ |
| ທະວັຕຖີບັງ ພຍະສະບາ ທັບຕິ | ອາຄາຫີບັງ ອັປປະໂພຊະບາ |
| ໙ ອັຕຕິຫີບາ ບະ ຈັບທິນາ | ວິຈີຫີບາ ບະອັບບະວາ |
| ຫັງສາຫີບາ ໂປກຂະອະບີ | ປະຕິບາ ກັບຍາ ບະ ໂສ່ພະເຕ |
| ໑໐ ປະຕິບາ ຊະບິຕັງ ໂພຄັງ | ອິຕຖິບາ ວະ ສຸຄຸຕະບັງ |
| ປຸອິໂສ ວະ ຫິ ປະທາໂບ | ອິຕຖີ ສູຈິ ສຸຕຕັງ ບະຖາ |
| ໑໑ ສັພພາ ບະຫີ ວັງກະຄະຕິ | ສັພເພ ກັຕຖະນະບາ ວະບາ |
| ສັພພິຕຖີໂຍ ກະເອ ປາປັງ | ລະພະນາບາ ບິວາຕະເກ |
| ໑໒ ອະຖາ ບະຫີ ຈະ ປະບະໂຖ ຈະ | ປາບາຄາອັງ ສະພາ ປະປາ |
| ເອວັງ ໂລກິຕຖີໂຍ ບານະ | ເວລາ ຕາສັງ ບະ ວິຊຊະຕິ |
| ໑໓ ວິວາທະສີລີ ຈະ ອຸສຸຍບະ | ປະສັບບະຄະບະຫິ ພາຫຸປາ |
| ພາບີ | ກະກີບີ |
| ອັຄຄັບກະພັກຕີ ປະອະເຄຫະ | ບາອີຈາຄາ ປຸຕຕະສະຕັງ |
| ສີລີ | ປຸຌບະ |

໑໔ ພຸຕເຕສຸ ນັບເທສຸ ຊະນະນີວະ ຄຸບເທປິ ຖາເຍ ພະຄິນີວະ
ກັບຕີບີ ອາທິຣີ
ກັມເມສຸ ພັຕເຕສຸ ກະຣີວະ ພະເບສຸ ນັບຕີ ສະບະເບສຸ
ທາສີບີ ວາມີບີ

໑໕ ຣູເປສຸ ສິກຂີ ກຸປະເບສຸ ຂະມີບີ ສາ ບາຣີ ເສຕຖີຕິ ບະທັບຕິ
ກາຍັສສະ ເພທາ ຕິທີເວ ປັນທິຕາ
ພະເວບບະ ສາ

໑໖ ສານາ ນິຄັຄີ ຕະບຸມັຊຊະອັງຄີ ສຸຣູ ສຸເກສີ ສະນະປະນີຕະ
ທັບຕິ
ຄັມພີຣະ ບາພີ ບຸວະຕີ ສຸສີລີ ທີບະກຸເລ ຊາຕາ ອະປິ ສາ
ວິວາເທ

໑໗ ສະຣະທັງ ອະຕຸກາລາບັງ ພະຣິບານັງ ຣູປະວະຕີ
ເຊຕໂຖ ປະທາໂບ ປຸຕຕາບັງ ທິສາບັງ ອະຕະຕະຣັງ ທິສັງ

໑໘ ບາ ອິຈເສ ປຸຣິສັງ ບາຣີ ຊາຕິ ຊາຕິ ປຸບັປປຸບັງ
ສາມິກັງ ອະປະຈາ ເບບບະ ອິບທັງວະ ປະຣິຈາຣິກາ

໑໙ ໂບ ອິຈເສ ປຸຣິສັງ ໂປໂສ ຊາຕິ ຊາຕິ ປຸບັປປຸບັງ
ປະຣະທາຣັງ ວິວັຊເຊບບະ ໂທຕະປາໂທວະ ກັທທະບັງ

໒໐ ອະຕີນະທັລລະໂກ ໂປໂສ ອາເບສິ ຕິມພະຣຸຖະບີງ
ຕັສສາ ອະສາບຸສັບທາຕິ ຕັງ ປະຣາພະວະໂຕ ມຸຂັງ

ອິຕິ ຖີກັບໂທ ນິຕຖິໂຕ

# (໓) ຣາຊາກັງໂທ

໑ ເອກະບານັງ ສະເຍ ຣາຊາ ທະວິບານັບຈະ ປັບທິໂຕ
ຄະຣາວາໂສ ຈະ ຕິບາໂນ ຈະຕຸບາໂນ ຕຸ ບາຈະໂກ

໒ ທະບະວາ ສຸຕິໂບ ຣາຊາ ບະທີ ເວໂຊ ຕະຖາ ອິເມ
ປັບຈະ ບ້າຖະ ບະ ວິຊຊັບຕິ ບະ ຕັຕຖະ ທິວະສັງ ວະເສ

໓ ບັສມິງ ປະເທເສ ບະ ນາໂບ ບະ ເປນັງ ບະ ຈະ ພັບທະວາ
ບະ ຈະ ວິຊຊາຄະໂນ ໂກຈັງ ບະ ຕັຕຖະ ທິວະສັງ ວະເສ

໔ ອະປຸກຕະກັງ ຄະຣັງ ສຸບຍັງ ຣັກຖັງ ສຸບຍັງ ອະຣາຊິກັງ
ອະສິປປັສສະ ນຸຂັງ ສຸບຍັງ ສັພພະສຸບຍັງ ທະລິທທະກັງ

໕ ທະບະນິຈເສ ວາບິຊເຊບບະ ວິທບະນິຈເສ ຣາຊາ ສຸຕັງ
ປຸຕກະນິຈເສ ຕະອຸບິຕຖັງ ຣາຊນິຈເສ ອິຈສາຄະເມ

໖ ບັຕໂຖ ບະຕິ ອະສັບຕຸກໂຖ ສັບຕຸຕໂຖ ຈະ ນະຫິປະຕິ
ບັຕຖາ ລັຊຊາ ຈະ ຄະບິເກ ກຸລະທິຕາ ຈະ ບິລັຊຊະກາ

໗ ປັກຂິບັງ ພະລະນາກາໂສ ນັຈສາບະມູທະກັງ ພະລັງ
ທຸພພະລັສສະ ພະລັງ ຣາຊາ ກຸມາຣານັງ ຣຸທັງ ພະລັງ

໘ ຂະນາ ຊາຄະຣິບຸຕຖານັງ ສັງວິພາໂຄ ທະບັກຂະນາ
ນາບະກັສສະ ຄຸນາ ເອເຕ ອິຈສິຕັພພາ ສັຄເຄສິນາ

໙ ສະກິງ ວະທັນຕິ ຣາຊາໂນ ສະກິງ ສະມະນະພຣາມທານນາ
ສະກິງ ສັປປຸຣິສາ ໂລເກ ເອສະ ທັມໂມ ສະນັນຕະໂນ

໑໐ ອະລະໂສ ຄິຫີ ການະໂພຄີ ອະສັບຍະໂຕ ປັພພະຊິໂຕ ບະ
ບະສາທຸ ສາທຸ
ຣາຊາ ອະບິສັມມະກາຣີ ບະ ປັນທິໂຕ ໂກທະໂບ ຕະນະປິ
ສາທຸ ບະ ສາທຸ

໑໑ ອາບັງ ວະບັງ ຊັບຍາ ຣາຊາ ສະບັງ ຊັບຍາ ກະຕາກະຕັງ
ບິຄຄະເທາ ບິຄຄະຫາຣະຫັງ ປັຄຄະເທາ ປັຄຄະຫາຣະຫັງ

໑໒ ປິຕຖິໂຕກກັງ ນິເວເສບບະ ກຸຈສິບາວະ ທຸຕາສະບັງ
ສານິກັງ ສັພພະພາເຄບະ ປະຣະໂຣກັງ ອະໂມທະວາ

໑໓ ທຸຕຖະພະຣິບາບະ ສັງວາໂສ ໂປໂສ ຈິຕຕຣະຫາສະໂກ
ສັງສັປເປ ຈະ ຄະເຣວາໂສ ມັຈຈຸເອວະ ບະ ສັງສະໂບ

໑໔ ພະທະໂວ ບັຕຖະ ເບຕຕາໂຣ ສັພເພ ປັນທິຕະມານິໂບ
ສັພເພ ມະທິຕຕະນິຈສັບຕິ ເຕສັງ ກັມມັງ ວິບັສສະຕິ

໑໕ ມຸລທະສິສໂສ ປະເທເສບະ ກຸບາຣິພະຣະເບບະ ຈະ
ອະສະຕະ ສັມປະໂບເຄບະ ປັນທິໂຕ ປບະວະສີທະຕິ

໑໖ ມາຕາປຸຕຕັກກະຣັງ ປາປັງ ສິສໂສ ປາປັງ ຄະຣຸກກະຣັງ
ຣາຊາ ຣັຕຖະກະຣັງ ປາປັງ ຣາຊາ ປາປັງ ປຸໂຣຫິໂຕ

໑໗ ອະໂກເທບະ ຊິເບ ໂກທັງ ອະສາທຸງ ສາທຸບາ ຊິເບ
ຊິເບ ກະທະຣິບັງ ທາເບບະ ສັຈເຈບາລິກະວາທິບັງ

໑໘ ອະທັບຕັງ ທະນະບັງ ທາບັງ ທາບັງ ສັພພັຕຖະ ສາທະກັງ
ທາເບບະ ປິບະວາຈາບະ ອຸບບະມັບຕິ ບະມັບຕິ ຈະ

໑໙ ທານັງ ສິເປຫະ ເພສັຊຊັງ ນັຈເສອັງ ໂທສະໂບສະຖັງ
ທານັງ ບະສັສສະ ເພສັຊຊັງ ນັຈເສອັງ ກັປປະໂບສະຖັງ
໒໐ ພາຫຸບະນັປປະສາອານັງ ສານັຄຄິຍາ ຊະບາ ຊະເບ
ຕິບເບບະ ໂບຕຕັງ ວັຕຕິຕັງ ເຕບະ ບາເຄປິ ພັບທະຕິ
໒໑ ອະສະຫາໂຍ ສະນັຕໂຖປິ ເຕຊະສາ ກິງ ກະອິສສະຕິ
ນິວາເຕ ປະຕິໂຕ ອັຄຄິ ສະບະເນວູປະສັມມະຕິ
໒໒ ບະ ອັບຍາ ສະນະກັງ ພຸບເຊ ກາບະໂພຄັງ ກຸທາຈະບັງ
ອາກັປປັງ ສະອະກຸຕຕິງ ວາ ນາລາຄັບທະວິເລປະບັງ
ວັຕຖັງ ສັພພະນະລັງກາລັງ ບະ ອັບຍາ ສະທິສັງ ກະເອ
໒໓ ບະ ເນ ອາຊາ ສະຂາ ໂຫຕິ ບະ ອາຊາ ໂຫຕິ ເນຖຸໂບ
ເອໂສ ສານິໂກ ນັຍຫັນຕິ ຈິຕເຕ ນິຕຖັງ ສຸຖາປະເບ
໒໔ ບາຕິທູເອ ພະເຊ ອັບໂຍ ນັຈຈາສັບເບ ປະວາຕະເກ
ບະ ອຸຊຸເກ ບາຕິນິບເບ ບະ ພະເຊ ອຸຈຈານາສະເບ
ສະ ໂທເສ ວັຊເຊ ເສວະໂກ ອັຄຄິວະ ສັບບະໂຕ ຕິຕເຖ
໒໕ ຖຸໂບ ສັພພັບບຸຕຸໂລບປິ ບະ ໂສພະຕິ ອະນິສສະໂບ
ອະນັຄຄາວະ ນະນິ ບະ ປິ ເທບາ ນິສສາບະ ໂສພະເຕ

ອາຊກັບໂທ ນິຖິຕໂຕ

## (ກ) ປະກິບບະກະກັບໂທ

໑ ອິຕຖິນິສໂສ ກຸໂຕ ສິລັງ ນັງສະພັກໂຂ ກຸໂຕ ທະບັງ
ສຸອາປາໂບ ກຸໂຕ ສັຈຈັງ ນະທາໂລໂພ ກຸໂຕ ລັຊຊັງ

ນະຫາຕັນໂທ ກຸໂຕ ສິປປັງ	ນະຫາໂກໂທ ກຸໂຕ ທະນັງ
໒ ສຸຮາໂບໂຄ ວິກາໂລ ຈະ	ສະນັຊຊະຈະຮະບັງ ຄະໂຕ
ຂິຫທາຮັຕໂຕ ປາປະນິຕໂຕ	ໂພຄາບັງ ອະລັສສະບັງ ນຸຂັງ
໓ ຊິວັບຕາປິ ນະຕາ ປັບຈະ	ພຍາສະບະປະຮິກິຕຕິໂກ
ຫຸກຂິໂຕ ພຍາທິໂກ ນຸລໂຫ	ວິບະວານິຊບະ ເສວະໂກ
໔ ອະບາຕະຕັງ ພະບັງ ທິສວາ	ທູຮະໂຕ ປະຮິວັຊຊະເຍ
ອາຄະຕັບຈະ ພະບັງ ທິສວາ	ອະພິໂຕ ໂຫຕິ ປັບທິໂຕ
໕ ນິທັສສຸໂກ ປະນາໂທ ຈະ	ສຸຂິໂຕ ໂຮຄະວາລັສໂສ
ອິຈສັບໂຕ ກັນນາຮາໂນ ຈະ	ສັຕເຕ ເຕ ສັຕຕະວັຊຊິຕາ
໖ ທຸຄະຕັງ ຄັຈສະ ເທ ລາພະ	ລາໂພ ລາເພບະ ປູຮະຕິ
ຖະເລ ວັສສັຕຖະ ປະຊຸບບະ	ອາໂປ ອາເປບະ ປູອະຕິ

ບັຕຖິບັງ ກັນນະປັຕຖາບັງ

໗ ບະຫິ ໂກຈິ ກະເຕ ກິຈເຈ	ກັຕຕາຮັງ ສະນະເປກຂະຕິ
ຕັສນາ ສັພພານິ ກິຈຈານິ	ສາວະເສເສ ບະ ກາຮະເຍ
໘ ຕຸລັງ ສັລລະຫຸກັງ ໂລເກ	ຕະໂຕ ປິປປະລະຊາຕະໂກ
ຕະໂຕ ວຸທທານະປະນາໂທ	ປະນາໂທ ພຸທທະສາສະເນ
໙ ປາສານະສັຕຕັງ ຄະຮຸກັງ	ຕະໂຕ ເທວາ ນາຈິກຂະບັງ
ຕະໂຕ ວັທທານະໂນວາໂທ	ຕະໂຕ ພຸທທັສສະ ສາສະບັງ
໑໐ ກາບັສສະ ທັກຂິນາ ທັ້ຕຖາ	ທາໂສ ເອຕຖະ ກະນິຕຖະກາ
ກັບບະບາສານະນັກຂິບັງ	ວານະຫັຕໂຖ ປາທະທາສະໂກ

໑໑ ຕັນພະລັສສະ ນັຊເຊ ປັຕເຕ ກຸເວໂຣ ຣັກຂະເຕ ສະທາ
ມູລັນທິ ຣັກຂະຕິ ປັກໂຂ ອັຄຄັນທີ ຈະ ກາລະກິນີ
ຕາບີ ພຸບເຊຍຍະ ສິບທິຕວາ ສີຣິເອວະ ປະວັທທະຕິ
໑໒ ສັນວັບທະຣັກຂາ ພຣຸຫມາ ວະ ອັຈທະຣັກຂາ ຈະ ພິສສຸໂບ
ຕັ້ສມາ ຫິ ເຕ ປູຊະບັ້ຕຸ ສະຫຸາ ນາບັບຕິຕັງ ບະຣັງ
໑໓ ໂຄນາທິ ສັພພະຄີທີບັງ ໂປສິຕາ ໂພຄະທາບະກາ
ຕັສມາ ຫິ ມາຕາປິຕາ ວະ ນາບະເບ ສັກກະເຣບບະ ຈະ
໑໔ ເບ ຈະ ຂາທັນຕິ ໂຄນັງສັງ ມາຕຸນັງສັງ ວະ ຂາທະເຣ
ນະເຕສຸ ເຕສຸຄິຊຊານັງ ທະເທ-ໂສເຕ ຈະ ວາທະເບ
໑໕ ຄຸຣີສີຫໂທ ສິປປາຣັນໂພ ຣະວິ ສຸໂກຣ ຈະ ນັຊຊີໂນ
ບະສີຫໂທ ພຸທທະຈັນໂທ ຈະ ໂສຣີ ອັງຄາຣະມາຣະບັງ
໑໖ ອັຕຖະນີບັງ ຄະຣຸງ ທັນຕິ ສິສສັງ ທັນຕິ ຈະ ຕຸທທັສສະ
ສິປປັງ ທັນຕິ ທະສະສິປປັງ ມາຕາປິຕາ ຈະ ປຸບບະມີ
໑໗ ບາລິກັງ ສັຕຕະ ນະ ພຸບເຊ ບາລາວຸງ ນະວະນັງ ຕະຖາ
ທະວາທະສະປະຣິນບັງ ພຸບເຊ ສິປປັງ ວິນັສສະຕິ
ຕຣີນີບບັງ
໑໘ ຈະເຊ ກຸລັງ ອັຕຖັງ ເອກັງ ຈະເຊ ກຸລັງ ຄາມັຕຖະກັງ
ຄາມັງ ຊະນະປະທະອັຕຖັງ ອັຕຕັຕຖັງ ປະຖະວິງ ຈະເຊ
໑໙ ເທສັງ ໂອສັຊຊະ ຄັຈສັນຕິ ສີໂຫ ສັປປຸຣິໂສ ຄັຊໂຊ
ຕັຕເຖວະ ນິທະນັງ ບັນຕິ ກາໂກ ກາປຸຣິໂສ ຈິເນ

໑໐ ຈະຣເຕຸບ ເກບະ ປາເຫບະ    ຕິຖເຕຍ ເກບະ ປັນທິໂຕ
ອະນິສັມນະ ປະຣັງ ຖານັງ    ບະຊະເຫ ປຸພພະມາລະບັງ
໑໑ ທະນະທັນບະ ປະໂບເຄສຸ    ຕະຖາ ວິທບາຄະເນສຸ ຈະ
ຫູເຕສຸ ອະປະຈະເຣສຸ    ຈະຊະລັຊຊາ ຕະທາ ພະເວ
໑໒ ປັພເພ ປັພເພ ກັນເນບຸຈສຸ    ວິເສສະຣະໂສ ອັຄຄະໂຕ
ຕະຖາ ສຸເນຕະຕິໂກ ສາທຸ    ວິປປະຣິໂຕ ຈະ ທຸຊຊະໂບ
໑໓ ກັສສະໂກ ວານິໂຊ ນັຈໂຈ    ສະມະໂບ ຈະ ສຸຕະສີລະວາ
ເຕສຸ ວິປຸລລະຊາເຕສຸ    ຣັຕຖັນປິ ວິປຸລັງ ສິບາ
໑໔ ອະສັຊຊາບະ ນະລາມັບຕາ    ອະບຸຕຖາບະ ນະລາ ຄະຣາ
ນະລັງ ວັບັສສະ ໂກສັຊຊັງ    ປະນາໂທ ຣັກຂະໂຕ ນະລັງ
໑໕ ຫີບາບັງ ຄັຈສະເຕ ວິຕັງ    ວິຣາບັງ ວະ ສັບຕະກັງ ຕັງ
ວະທັບຕິ ຈະ ທີບາ ຊະບາ    ປຸພພະກັມມະປະທາບາຕິ
ບະ ວະທັບຕິ ເຈວັງ ທີຣາ    ວາບາມິງສຸ ສັພເພ ກັມເມ
ບະເຈ ສີຊຊະຕິ ຕັງ ກັມມັງ    ອະພະລັງ ເອວະ ກິງໂທໂສຕິ

ປະກິບບະກະກັບໂທ ບິຕຖິໂຕ

ພິມທີ່ໂຮງພິມລ່ຽງຊຽງຈິງຈະເຣີນ ໒໕ມີ ຖນິນບໍາຣຸງເມືອງ

ສໍາຣາບຣາດ ບາງກອກ

ນາຍຕຽວຈຸ໊ຍ ແຊ່ຕຽວ ຜູ້ພິມແລະຜູ້ໂຄສະນາ ໒໕໐໓

# ໃບແກ້ຄຳຜິດ

| ໜ້າ | ບັນທັດທີ່ | ຄຳຜິດ | ຄຳຖືກ |
|---|---|---|---|
| ໑ | ໔ | ເກ່າ | ເກົ່າ |
| ໑ | ໑໐ | ຫລາຍ | ຫາຍ |
| ໒ | ໓ | ຊີວິຕ | ຊີ໌ວິດ |
| ໓ | ໔ | ສັງເກຕ | ສັງເກດ |
| ໔ | ໕ | ສັຕຕູ | ສັດຕູ |
| ໕ | ໗ | ຊີວິຕ | ຊີວິດ |
| ໑໒ | ໑໓ | ພາບ | ພານ |
| ໑໕ | ໘ | ນາລີ | ບາຣີ |
| ໒໐ | ໓ | ບຸຣຸສ | ບຸຣຸດ |
| ໒໐ | ໕ | ສຳຣວມ | ສັງຣວມ |
| ໒໑ | ໓ | ປຸໂຣຫິຕ | ປຸໂຣຫິດ |
| ໒໓ | ໑໗ | ລາບເອີບ | ລາບເອີບ |
| ໒໕ | ໕ | ວັນອັງຄາຣ | ວັນອັງຄານ |
| ໒໘ | ໓ | ບະຖະນັງ ບະປະຣາຈີໂຕ | ປະຖະນັງບະປະຣາຊີໂຕ |
| ໒໘ | ໓ | ຫຸຕີບົງ ປະຣາຈີໂຕ ທະບັງ | ຫຸຕິບັງນາປະຣາຊີໂຕທະບັງ |
| ໒໘ | ໗ | ບິເບ | ຫິເບ |